ບົດລາຍງານການເຄື່ອນໄຫວທຸລະກິດ
ສຳລັບໄລຍະສາມເດືອນຂອງໄຕມາດທີ III
30 ກັນຍາ 2022



I. ສະພາບລວມຂອງ ທຄຕລ

1. ວິໄສທັດ

ທຄຕລ ໄດ້ຮັບການປັບປຸງວິໄສທັດຂອງຕົນຄືນໃໝ່ ໃນແຜນຍຸດທະສາດໄລຍະຍາວ 2021 – 2025 ເພື່ອປະກອບເຂົ້າໃນການພັດທະນາວຽກງານຂອງຕົນໃຫ້ບັນລຸຕາມເປົ້າໝາຍ ແລະ ວັດຖຸປະສົງຄື: “ເປັນທະນາຄານທີ່ເຂັ້ມແຂງ ທັນສະໄໝ ໄດ້ມາດຕະຖານສາກົນ”.

2. ພາລະກິດ

ເພື່ອເຮັດໃຫ້ ທຄຕລ ກາຍເປັນທະນາຄານທີ່ເຂັ້ມແຂງ ທັນສະໄໝ ໄດ້ມາດຕະຖານສາກົນ ພາລະກິດຫຼັກທີ່ສຳຄັນຂອງ ທຄຕລ ທີ່ຈະຕ້ອງໄດ້ສຸມໃສ່ ແມ່ນການພັດທະນາການປັບປຸງດ້ານບໍລິການໃຫ້ແທດເໝາະກັບໄລຍະການປ່ຽນແປງໃໝ່, ສ້າງຄວາມເຂັ້ມແຂງໝັ້ນຄົງທາງດ້ານການເງິນ ແລະ ສອດຄ່ອງຕາມຫຼັກການບາເຊ ຊ 2, ພັດທະນາລະບົບໄອທີ ແລະ ເທັກໂນໂລຊີທີ່ທັນສະໄໝ ເຂົ້າໃນລະບົບບໍລິການ, ພັດທະນາດ້ານລະບົບຂໍ້ມູນຂ່າວສານໃຫ້ຖືກຕ້ອງ, ຊັດເຈນ ໂປ່ງໃສ, ວ່ອງໄວ ແລະ ຮັບປະກັນຄວາມປອດໄພໄດ້ມາດຕະຖານສາກົນ. ພ້ອມນັ້ນ, ກ່ຳເນັ້ນໃສ່ການພັດທະນາບຸກຄະລາກອນໃນແຕ່ລະດ້ານ ໃຫ້ມີຄວາມຊຳນິຊຳນານ, ເປັນມືອາຊີບດ້ານການບໍລິການທະນາຄານ ເພື່ອຮອງຮັບການປ່ຽນແປງຂອງການພັດທະນາ ທຄຕລ, ພ້ອມທັງສ້າງຄວາມເພິ່ງພໍໃຈໃຫ້ກັບລູກຄ້າທີ່ມາໃຊ້ບໍລິ ການ ແລະ ສ້າງຜົນປະໂຫຍດສູງສຸດໃຫ້ແກ່ຜູ້ຖືຮຸ້ນ ທຄຕລ ແບບຍືນຍົງ.

❖ ແຜນງານ ແລະ ໂຄງການ 2022

ເພື່ອເຮັດໃຫ້ ທຄຕລ ໄດ້ພັດທະນາປັບປຸງ ແລະ ສ້າງຄວາມເຂັ້ມແຂງໝັ້ນຄົງຍືນຍົງ ກາຍເປັນທະນາຄານທີ່ນຳໜ້າໃນດ້ານຄວາມທັນສະໄໝ, ໄດ້ມາດຕະຖານສາກົນໃນລະບົບທະນາຄານ ໃນ ສປປ ລາວ. ທຄຕລ ໄດ້ກຳນົດຍຸດທະສາດການພັດທະນາ ເພື່ອກຳນົດບັນດາທິດທາງ, ຄາດໝາຍ ແລະ ແຜນການຈັດຕັ້ງປະຕິບັດລະອຽດ ເຊິ່ງໄດ້ແບ່ງອອກເປັນ 3 ຍຸດທະສາດໃຫຍ່ ປະກອບມີ 11 ແຜນງານ ແລະ 42 ໂຄງການ. ແຜນງານ ແລະ ໂຄງການທີ່ຈັດຕັ້ງປະຕິບັດໃນປີ 2022 ທີ່ຜ່ານການທົບທວນຄືນ ມີ 11 ແຜນງານ, 38 ໂຄງການ ແລະ 305 ແຜນວຽກ ດັ່ງລາຍລະອຽດລຸ່ມນີ້:

- **ຍຸດທະສາດທີ 1: ສ້າງຄວາມເຂັ້ມແຂງໃຫ້ອົງກອນຢ່າງຮອບດ້ານ** (ປະກອບມີ 5 ແຜນງານ 20 ໂຄງການ ແລະ 188 ແຜນວຽກ)
  - ການບໍລິຫານການເງິນ ແລະ ເພີ່ມປະສິດທິພາບການດຳເນີນທຸລະກິດໃຫ້ຍືນຍົງ ປະກອບມີ 5 ໂຄງການ ແລະ 89 ແຜນວຽກ;
  - ການຄຸ້ມຄອງ ແລະ ບໍລິຫານສິນເຊື່ອ ປະກອບມີ 5 ໂຄງການ ແລະ 32 ແຜນວຽກ;
  - ການພັດທະນາບໍລິຫານບຸກຄະລາກອນ ໃຫ້ເຂັ້ມແຂງ ແລະ ມີປະສິທິພາບ ປະກອບມີ 4 ໂຄງການ ແລະ 30 ແຜນວຽກ;
  - ສ້າງລະບົບຄຸ້ມຄອງຄວາມສ່ຽງ ແລະ ສ້າງພື້ນຖານຕ້ານການຟອກເງິນໃຫ້ເຂັ້ມແຂງ ປະກອບມີ 5 ໂຄງການ ແລະ 37 ແຜນວຽກ;
  - ພັດທະນາການຄຸ້ມຄອງບໍລິຫານໃຫ້ໄດ້ມາດຖານສາກົນ ປະກອບມີ 1 ໂຄງການ.
- **ຍຸດທະສາດທີ 2: ຍຸດທະສາດຫັນເປັນທັນສະໄໝ ໂດຍນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳໃໝ່ໆໃນການດຳເນີນທຸລະກິດ ກ້າວສູ່ຍຸກເສດຖະກິດດິຈິຕອລ** (ປະກອບມີ 3 ແຜນງານ 13 ໂຄງການ ແລະ 95 ແຜນວຽກ)
  - ການພັດທະນາ ແລະ ການຄຸ້ມຄອງລະບົບໄອທີ ປະກອບມີ 6 ໂຄງການ ແລະ 41 ແຜນວຽກ;
  - ຄຸ້ມຄອງບໍລິຫານຂໍ້ມູນ ແລະ ການພັດທະນາວຽກງານສະຖິຕິ ໃຫ້ທັນສະໄໝໄດ້ມາດຕະຖານສາກົນ ແລະ ມີຄຸນນະພາບ ປະກອບມີ 5 ໂຄງການ ແລະ 12 ແຜນວຽກ;

- ພັດທະນາຜະລິດຕະພັນ ເພື່ອຫັນສູ່ການບໍລິການໃນຮູບແບບ Digital Banking ປະກອບມີ 2 ໂຄງການ ແລະ 42 ແຜນວຽກ;

- **ຍຸດທະສາດທີ 3: ຍຸດທະສາດສ້າງການຄຸ້ມຄອງ ແລະ ບໍລິການຕາມມາດຕະຖານສາກົນ** (ປະກອບມີ 3 ແຜນງານ 5 ໂຄງການ ແລະ 22 ແຜນວຽກ)
  - ການປັບປຸງ, ພັດທະນາລະບົບບັນຊີ ແລະ ມາດຕະຖານການລາຍງານການເງິນ ປະກອບມີ 3 ໂຄງການ ແລະ 12 ແຜນວຽກ;
  - ພັດທະນາ ແລະ ປັບປຸງລະບົບກວດກາໃຫ້ເຂັ້ມແຂງໄດ້ມາດຕະຖານ ປະກອບມີ 2 ໂຄງການ ແລະ 7 ແຜນວຽກ;
  - ພັດທະນາໂຄງການ PCI Compliance ຫຼື Payment Card Industry Data Security Standard ປະກອບມີ 3 ແຜນວຽກ.

II. ຖານະການເງິນ ແລະ ຜົນດຳເນີນງານ

1. ເສດຖະກິດມະຫາພາກ ສປປ ລາວ ແລະ ທ່າອ່ຽງໃນຕໍ່ໜ້າ

ອີງໃສ່ສະພາບເສດຖະກິດໂລກທີ່ມີຄວາມທ້າທາຍ ໂດຍສະເພາະການເພີ່ມຂຶ້ນຂອງອັດຕາເງິນເຟີ້, ຄວາມຫຍຸ້ງຍາກດ້ານການເງິນຂອງຫຼາຍປະເທດ, ຂໍ້ຂັດແຍ່ງລະຫວ່າງລັດເຊຍ ແລະ ຢູເຄນ ແລະ ສະພາບການລະບາດຂອງພະຍາດໂຄວິດໃນພາກພື້ນ ແລະ ສາກົນ, ໄດ້ສົ່ງຜົນກະທົບຕໍ່ສະພາບເສດຖະກິດຂອງ ສປປ ລາວ ທາງກົງ ແລະ ທາງອ້ອມ. ອີງຕາມການລາຍງານຂອງ ສະຖາບັນຄົ້ນຄວ້າວິທະຍາສາດ ແລະ ສັງຄົມແຫ່ງຊາດ, ສະພາບເສດຖະກິດຂອງລາວໃນປີ 2022 ຄາດວ່າຈະຂະຫຍາຍຕົວຫຼຸດລົງຈາກ 4,0% (ຄາດຄະເນຕົ້ນປີ) ເປັນ 3,0% ໃນປີ 2022. ປັດໃຈຕົ້ນຕໍເນື່ອງຈາກສະຖຽນລະພາບທາງດ້ານເສດຖະກິດມະຫາພາກຍັງມີຄວາມບອບບາງ, ຄັງສຳຮອງເງິນຕາຕ່າງປະເທດຈຳກັດ ໃນຂະນະເງິນກີບສືບຕໍ່ອ່ອນຄ່າທຽບໃສ່ເງິນຕາຕ່າງປະເທດ ແລະ ອັດຕາເງິນເຟີ້ມີທ່າອ່ຽງເພີ່ມຂຶ້ນ, ນອກຈາກນີ້, ສະພາບການລົງທຶນພາກເອກະຊົນ ແລະ ລັດຖະບານມີທ່າອ່ຽງຫຼຸດລົງ ໂດຍສາເຫດຕົ້ນຕໍຍ້ອນສະພາບຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ພາລະໜີ້ສິນສາທາລະນະ.

ເຖິງຢ່າງໃດກໍ່ຕາມ, ປັດໃຈທີ່ສະໜັບສະໜຸນ ການເຕີບໂຕຂອງເສດຖະກິດລາວຍັງແມ່ນ ຂະແໜງພະລັງງານ ແລະ ບໍ່ແຮ່, ຮອງລົງມາແມ່ນຂະແໜງອຸດສາຫະກຳປຸງແຕ່ງ, ຂະແໜງຫັດຖະກຳ ລວມເຖິງຂະແໜງການທ່ອງທ່ຽວ ແລະ ການບໍລິການ ທີ່ໄດ້ຮັບຜົນປະໂຫຍດຈາກການເປີດປະເທດ ລວມເຖິງການເປີດນຳໃຊ້ເສັ້ນທາງລົດໄຟ ລາວ-ຈີນ.

1.1. ອັດຕາເງິນເຟີ້

ສະພາບລວມຂອງອັດຕາເງິນເຟີ້ ປະຈຳເດືອນກັນຍາ 2022 ຢູ່ໃນລະດັບ 34,05% ທຽບໃສ່ເດືອນກັນຍາ 2021 ທີ່ລະດັບ 4,17% ເຊິ່ງຖືເປັນການເພີ່ມຂຶ້ນສູງສຸດໃນຮອບ 20 ປີ. ສາເຫດທີ່ເຮັດໃຫ້ອັດຕາເງິນເຟີ້ເພີ່ມຂຶ້ນສູງ ແມ່ນຍ້ອນການໜັງຕີງເພີ່ມຂຶ້ນຂອງໝວດສິນຄ້າຕົ້ນຕໍ ເຊັ່ນ: ໝວດຄົມມະນາຄົມ ແລະ ຂົນສົ່ງ ແລະ ໝວດອາຫານ-ເຄື່ອງດື່ມບໍ່ມີທາດເຫຼົ້າ, ນອກຈາກນີ້, ການເພີ່ມຂຶ້ນຂອງລາຄານ້ຳມັນ, ກາສ ແລະ ການອ່ອນຄ່າຂອງເງິນກີບ ເປັນປັດໄຈສຳຄັນທີ່ເຮັດໃຫ້ອັດຕາເງິນເຟີ້ເພີ່ມຂຶ້ນສູງ.

1.2. ອັດຕາແລກປ່ຽນ

ໂດຍສະເລ່ຍ, ອັດຕາແລກປ່ຽນລະບົບທະນາຄານ ສະເລ່ຍ 14.725 ກີບ/ໂດລາ ເພີ່ມຂຶ້ນເຖິງ 56% ທຽບປີຕໍ່ປີ (ຈາກ 9.452 ກີບ/ໂດລາ), ໃນຂະນະທີ່ອັດຕາແລກປ່ຽນນອກລະບົບເພີ່ມຂຶ້ນສະເລ່ຍ 67% ທຽບໃສ່ໄລຍະດຽວກັນ. ນອກຈາກນີ້, ສ່ວນຕ່າງລະຫວ່າງອັດຕາແລກປ່ຽນຕະຫຼາດນອກລະບົບ ແລະ ທະນາຄານມີທ່າອ່ຽງເພີ່ມຂຶ້ນ (ສ່ວນຕ່າງເພີ່ມຂຶ້ນຈາກ 6% ໃນທ້າຍປີ 2021 ເປັນ 18% ໃນເດືອນ 06/2022). ສາເຫດການເພີ່ມຂຶ້ນຂອງອັດຕາແລກປ່ຽນມາຈາກປັດໄຈພາຍໃນ ແລະ ປັດໄຈພາຍນອກ ໂດຍປັດໄຈພາຍໃນມາຈາກຄວາມຕ້ອງການເງິນໂດລາທີ່ເພີ່ມຂຶ້ນຢ່າງຕໍ່ເນື່ອງ ໃນຂະນະທີ່ເງິນໂດລາມີການແຂງຄ່າທຽບໃສ່ສະກຸນເງິນຕ່າງໆໃນທົ່ວໂລກ.

ສຳລັບອັດຕາແລກປ່ຽນເງິນບາດ, ທົ່ວລະບົບທະນາຄານ ສະເລ່ຍ 478,9 ກີບ/ບາດ ເພີ່ມຂຶ້ນ 45% ທຽບໃສ່ປີຜ່ານມາ, ໃນຂະນະທີ່ອັດຕາແລກປ່ຽນນອກລະບົບ ສະເລ່ຍ 504,7 ກີບ/ບາດ ເພີ່ມຂຶ້ນປະມານ 52%. ສຳລັບສ່ວນຕ່າງລະຫວ່າງອັດຕາແລກປ່ຽນຕະຫຼາດ ແລະ ທະນາຄານ ເຫັນວ່າມີທ່າອ່ຽງເພີ່ມຂຶ້ນ. ອັດຕາແລກປ່ຽນ ກີບ/ບາດເພີ່ມຂຶ້ນມີສາເຫດຈາກຄວາມຕ້ອງການເງິນບາດໃນລາວມີສູງ ເພາະນຳເຂົ້າສິນຄ້າຈາກໄທ ກວມເອົາສັດສ່ວນຫຼາຍ (ຂໍ້ມູນອັບເດດຈາກ ທະນາຄານແຫ່ງ ສປປລາວ ມີນາ 2022).

1.3. ສະພາບການນຳເຂົ້າ-ສົ່ງອອກ ແລະ ການລົງທຶນ

ມູນຄ່າການນຳເຂົ້າ ແລະ ສົ່ງອອກ ຂອງ ສປປ ລາວ ປະຈຳເດືອນກັນຍາ ປີ 2022 ບັນລຸໄດ້ປະມານ 1.146 ລ້ານໂດລາສະຫະລັດ. ໃນນັ້ນ, ມູນຄ່າການສົ່ງອອກ ມີປະມານ 456 ລ້ານໂດລາ, ມູນຄ່າການນຳເຂົ້າ ມີປະມານ 689 ລ້ານໂດລາ ແລະ ຂາດດຸນການຄ້າປະມານ 233 ລ້ານໂດລາ. ສຳລັບສິນຄ້າສົ່ງອອກຫຼັກປະກອບດ້ວຍ ຄຳປະສົມ, ຄຳແທ່ງ, ຢາງພາລາ, ຝຸ່ນ (ປຸຍ), ແຮ່ທອງ, ນ້ຳຕານ ແລະ ອື່ນໆ. ສຳລັບສິນຄ້ານຳເຂົ້າຕົ້ນຕໍ ແມ່ນອຸປະກອນກົນຈັກໜັກ, ນ້ຳມັນກາຊວນ, ພາຫານະທາງບົກ ແລະ ນ້ຳມັນແອັດຊັງ (Lao PDR Trade Portal, ກັນຍາ 2022).

2. ການເຄື່ອນໄຫວທີ່ພົ້ນເດັ່ນໂດຍຫຍໍ້ ຂອງ ທຄຕລ

ໃນໄລຍະໄຕມາດ 3 ປີ 2022 ທຄຕລ ໄດ້ຈັດກອງປະຊຸມທົບທວນຜົນການດຳເນີນທຸລະກິດ 1 ຄັ້ງ, ຈັດກອງປະຊຸມສະພາບໍລິຫານສະໄໝວິສາມັນ 2 ຄັ້ງ; ຈັດພິທີມອບ-ຮັບໜ້າທີ່ຂອງຜູ້ອຳນວຍການ ທຄຕລ ລະຫວ່າງຜູ້ເກົ່າ ແລະ ຜູ້ໃໝ່; ສຳເລັດການຮັບຮອງເອກະສານລາງານການເງິນ ປະຈຳ 06 ເດືອນຕົ້ນປີ 2022 ທີ່ຜ່ານການທົບທວນຈາກຜູ້ກວດສອບອິດສະຫຼະ (PWC); ສຳເລັດການພັດທະນາ Multiple Bank-Linked (MBL) ໂດຍຮ່ວມກັບນັກພັດທະນາຈາກ ສ. ເກົາຫຼີ ໃນການນຳໃຊ້ລະບົບຊື້-ຂາຍຮຸ້ນ ສຳລັບບໍລິສັດຫຼັກຊັບໃຫ້ສາມາດເຊື່ອມຕໍ່ກັບທະນາຄານຕົວແທນ; ສຳເລັດການຄົ້ນຄວ້າກຳນົດຕົວຊີ້ວັດ KPI ຂອງສາຂາ ປະຈຳປີ 2023 ໂດຍພື້ນຖານ; ດ□ຳເນີນການທົບທວນບັນດາຮ່າງລະບຽບທີ່ຕິດພັນ ກ່ອນການເຂົ້າເປັນສະມາຊິກອົງການປະກັນສັງຄົມຢ່າງລະອຽດຄືນ; ສຳເລັດການປັບປຸງນະໂຍບາຍ 2 ສະບັບຄື: ນະໂຍບາຍວ່າດ້ວຍການບໍລິຫານເຫດການສູນເສຍພາຍໃນ ແລະ ນະໂຍບາຍວ່າດ້ວຍການບໍລິຫານຄວາມຕໍ່ເນື່ອງທາງທຸລະກິດ; ດຳເນີນການຄົ້ນຄວ້າສ້າງຕັ້ງ ບໍລິສັດ ທຄຕລ ບໍລິຫານຊັບສິນ ຈຳກັດ ເຊິ່ງປະຈຸບັນກຳລັງຄົ້ນຄວ້າທາງເລືອກເພີ່ມຕື່ມ ເພື່ອແກ້ໄຂບັນຫາໜີ້ສິນຂອງ ທຄຕລ; ດຳເນີນການຄົ້ນຄວ້າຄວາມເປັນໄປໄດ້ໃນການສ້າງຕັ້ງ ບໍລິສັດ ໄອທີ ທຄຕລ; ນອກຈາກນັ້ນ, ໄດ້ເປີດໜ່ວຍບໍລິການ 2 ແຫ່ງຄື: ໜ່ວຍບໍລິການ ໂພນພະເນົາ ແລະ ໜ່ວຍບໍລິການເຂດພັດທະນາກວມລວມໄຊເສດຖາ.

3. ຂໍ້ມູນທາງດ້ານການເງິນທີ່ສຳຄັນຂອງ ທຄຕລ

ຮອດທ້າຍໄຕມາດ 3 ປີ 2022 ທຄຕລ ມີຕົວເລກຜົນການດຳເນີນທຸລະກິດ ດັ່ງລຸ່ມນີ້:

- **ຍອດຊັບສິນ:** 86.652.772 ລ້ານກີບ, ທຽບໃສ່ແຜນການປີ 2022 ປະຕິບັດໄດ້ລື່ນແຜນການ 19,47% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 37,34%;
- **ຍອດເງິນກູ້ທັງໝົດ:** 40.673.338 ລ້ານກີບ, ທຽບໃສ່ແຜນການປີ 2022 ປະຕິບັດໄດ້ລື່ນແຜນການ 28,16% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 36,97%;
- **ອັດຕາສ່ວນ NPL:** 3,24%
- **ຍອດເງິນຝາກ:** 79.479.447 ລ້ານກີບ, ທຽບໃສ່ແຜນການປີ 2022 ປະຕິບັດໄດ້ລື່ນແຜນການ 20,42% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 39,22%;
- **ທຶນທັງໝົດ:** 2.139.294 ລ້ານກີບ, ທຽບໃສ່ແຜນການປີ 2022 ປະຕິບັດໄດ້ 86,61% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາຫຼຸດລົງ 0,16%;
- **ກຳໄລ/ຂາດທຶນ ກ່ອນອາກອນ:** ສຳລັບໄລຍະສາມເດືອນ ຂອງໄຕມາດທີ 03 ປີ 2022 ທຄຕລ ມີກຳໄລ 28.348 ລ້ານກີບ, ກຳໄລກ່ອນອາກອນສຳລັບໄລຍະ 09 ເດືອນປີ 2022 ປະຕິບັດໄດ້ 25.581 ລ້ານກີບ, ທຽບໃສ່ແຜນການປີ 2022 ປະຕິບັດໄດ້ 43,36%;
- **ກຳໄລ/ຂາດທຶນ ຫຼັງອາກອນ:** ສຳລັບໄລຍະສາມເດືອນ ຂອງໄຕມາດທີ 03 ປີ 2022 ທຄຕລ ປະຕິບັດໄດ້ 37.437 ລ້ານກີບ, ກຳໄລຫຼັງອາກອນສຳລັບໄລຍະ 09 ເດືອນປີ 2022 ປະຕິບັດໄດ້ 24.740 ລ້ານກີບ, ທຽບໃສ່ແຜນການປີ 2022 ປະຕິບັດໄດ້ 52,42%.

III. ຂໍ້ມູນທົ່ວໄປ ແລະ ຂໍ້ມູນສຳຄັນບາງດ້ານ ຂອງ ທຄຕລ

- **ທີ່ຕັ້ງ ແລະ ເຄືອຂ່າຍ**

ສຳນັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ນະອັນທີ 30 ກັນຍາ 2022 ທະນາຄານມີ (1) ສຳນັກງານໃຫຍ່, (6) ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ, (20) ສາຂາ, (96) ໜ່ວຍບໍລິການ ແລະ (10) ຫ້ອງແລກປ່ຽນເງິນຕາ ທົ່ວ ສປປ ລາວ.

ຕິດຕໍ່ ແລະ ພົວພັນ ສອບຖາມຂໍ້ມູນຕ່າງໆຂອງ ທຄຕລ

- ເບີໂທ (+856-21) 213200 ຫຼື ໂທ 1555
- ແຟັກ (+856-21) 213202
- ອີເມວ: bcelhqv@bcel.com.la
- ເວັບໄຊ: www.bcel.com.la

- **ປະຫວັດຄວາມເປັນມາໂດຍຫຍໍ້ ຂອງ ທຄຕລ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ດຳເນີນທຸລະກິດໃນຮູບແບບມະຫາຊົນ ແລະ ຈົດທະບຽນຢູ່ໃນຕະຫຼາດຫຼັກຊັບ ສປປ ລາວ.

ທະນາຄານການຄ້າຕ່າງປະເທດລາວ ໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ໃບອະນຸຍາດສ້າງຕັ້ງທະນາຄານ ເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989, ໃນວັນທີ 23 ທັນວາ 2010 ທະນາຄານໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນ. ທະນາຄານໄດ້ປ່ຽນຊື່ມາເປັນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອີງຕາມໃບທະບຽນວິສາຫະກິດ ເລກທີ 0061/ຫຈທ, ລົງວັນທີ 10 ມັງກອນ 2011 ອອກໂດຍກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ. ໃນວັນທີດັ່ງກ່າວ, ລັດຖະບານ ເຊິ່ງຕາງໜ້າໂດຍກະຊວງການເງິນເປັນຜູ້ຖືຮຸ້ນໃຫຍ່ສຸດ ໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ວັນທີ 15 ກໍລະກົດ 2011, ກະຊວງການເງິນ ຂາຍຮຸ້ນສາມັນ 10% (ເທົ່າກັບ 13.657.759 ຮຸ້ນ) ໃຫ້ຄູ່ຮ່ວມຮຸ້ນທາງຍຸດທະສາດ ຊື່ວ່າ ທະນາຄານ COFIBRED ອີງຕາມສັນຍາການຊື້-ຂາຍຮຸ້ນສາມັນ ລະຫວ່າງ ກະຊວງການເງິນ ແລະ ທະນາຄານ COFIBRED.

ໃນວັນທີ 17 ສິງຫາ 2017 ທຄຕລ ໄດ້ສະເໜີຂາຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ຂາຮຸ້ນໃໝ່ ເພື່ອເພີ່ມທຶນຈົດທະບຽນ. ທະນາຄານໄດ້ຮັບຂໍ້ຕົກລົງສະບັບໃໝ່ ເລກທີ 21/ທຫລ, ລົງວັນທີ 13 ກັນຍາ 2017 ອອກໂດຍ ທະນາຄານແຫ່ງ ສປປ ລາວ. ໃນວັນທີ 15 ກັນຍາ 2017 ຕະຫຼາດຫຼັກຊັບລາວໄດ້ຢັ້ງຢືນວ່າທະນາຄານໄດ້ເພີ່ມທຶນຈົດທະບຽນຈຳນວນ 355.728.500.000 ກີບ (ເທົ່າກັບ 71.145.700 ຮຸ້ນ) ຕາມໃບຢັ້ງຢືນເລກທີ 01/ຕລຊລ, ລົງວັນທີ 15 ກັນຍາ 2017 ແລະ ໃບທະບຽນວິສາຫະກິດສະບັບປັບປຸງໃຫມ່ ເລກທີ 0429/ຫຈທ, ລົງວັນທີ 18 ພຶດສະພາ 2018 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ.

ໃນວັນທີ 11 ຕຸລາ 2019 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ອະນຸມັດໃຫ້ທະນາຄານປັບປຸງໂຄງສ້າງຜູ້ຖືຮຸ້ນໂດຍການສະເໜີຂາຍສິດຊື້ຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ສາທາລະນະຊົນ. ຈຸດປະສົງຂອງການແບ່ງຮຸ້ນຂາຍຂອງລັດຖະບານ ແມ່ນເພື່ອສະໜັບສະໜູນສະເໜີຂາຍໃຫ້ແກ່ຜູ້ຖືຮຸ້ນທີ່ຫຼາກຫຼາຍ ເພື່ອພັດທະນາທະນາຄານໃຫ້ເຕີບໃຫຍ່ຂະຫຍາຍຕົວ ແລະ ໝັ້ນຄົງ. ພ້ອມດຽວກັນນັ້ນໃນວັນທີ 29 ພະຈິກ 2019 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ຢັ້ງຢືນວ່າ ທະນາຄານໄດ້ສຳເລັດການສະເໜີຂາຍຮຸ້ນໃນອັດຕາສ່ວນ 10% ຂອງທະນາຄານໄດ້ສຳເລັດ.

ປະຈຸບັນ ໂຄງສ້າງການຖືຮຸ້ນຂອງທະນາຄານ: ລັດຖະບານຖືຮຸ້ນ 60%, ນັກລົງທຶນພາຍໃນ (ລວມທັງພະນັກງານ ທຄຕລ) ແລະ ນັກລົງທຶນຕ່າງປະເທດ 30% ແລະ ຄູ່ຮ່ວມຮຸ້ນທາງຍຸດທະສາດ 10%.

ກິດຈະກຳຫລັກຂອງທະນາຄານ ແມ່ນເພື່ອສະໜອງການບໍລິການ ລວມທັງການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວ ຈາກນິຕິບຸກຄົນ ແລະ ບຸກຄົນ; ສະໜອງເງິນກູ້ໄລຍະສັ້ນ, ກາງ, ຍາວ ໃຫ້ແກ່ຫົວໜ່ວຍທຸລະກິດ ແລະ ບຸກຄົນຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງທະນາຄານ; ບໍລິການແລກປ່ຽນເງິນຕາຕ່າງປະເທດ, ບໍລິການຊຳລະສະສາງ, ບໍລິການການຄ້າລະຫວ່າງປະເທດ, ບໍລິການໜັງສືສິນເຊື່ອ, ຄ້ຳປະກັນ, ໃຫ້ບໍລິການຊື້ຂາຍອັດຕາມີຄ່າອື່ນໆ ແລະ ໃຫ້ບໍລິການດ້ານທະນາຄານອື່ນໆ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ໂດຍສະເພາະແມ່ນບໍລິການດ້ານປະກັນໄພ, ບໍລິການເປັນນາຍໜ້າຊື້ຂາຍຫຼັກຊັບເປັນຕົ້ນ.

ທຶນຈົດທະບຽນ

ທຶນຈົດທະບຽນ ນະວັນທີ 30 ກັນຍາ 2022 ແມ່ນ 1.038.617 ລ້ານກີບ (ວັນທີ 31 ທັນວາ 2021: 1.038.617 ລ້ານກີບ).

IV. ໂຄງຮ່າງການຈັດຕັ້ງ ສະພາບໍລິຫານ, ຄະນະອຳນວຍການ ແລະ ການເຄື່ອນໄຫວ ຂອງຄະນະກຳມະການຂຶ້ນກັບສະພາບໍລິຫານ

1. ໂຄງຮ່າງການຈັດຕັ້ງ ແລະ ປະຫວັດໂດຍຫຍໍ້ ຂອງສະມາຊິກສະພາບໍລິຫານ

1.1 ສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ:

ສະມາຊິກສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ນະວັນທີ 30 ກັນຍາ 2022 ປະກອບ ມີ **7** ທ່ານ:

– ທ່ານ ຄຳສຸກ ສູນດາລາ	ຮັກສາການປະທານຊົ່ວຄາວ
– ທ່ານ ປະສົມເພັດ ຄຳຕັນ	ສະມາຊິກ
– ທ່ານ Stephane Mangiavacca	ສະມາຊິກ
– ທ່ານ ຮສ ທອງເພັດ ຈັນທະນີວົງ	ສະມາຊິກ
– ທ່ານ ນ. ລັດດາວັນ ຊົງວິໄລ	ສະມາຊິກ
– ທ່ານ ສອນໄຊ ສີລາເພັດ	ສະມາຊິກ
– ທ່ານ ວຽງສຸກ ຈຸນທະວົງ	ສະມາຊິກ

1.2. ປະຫວັດຫຍໍ້ຂອງສະພາບໍລິຫານ

❖ ທ່ານ ຄຳສຸກ ສູນດາລາ: ຮັກສາການຊື່ອຄາວ ປະທານສະພາບໍລິຫານ



- ວັນເດືອນປີເກີດ: 03/06/1945
- ສັນຊາດ: ລາວ
- ພາສາ: ລາວ, ອັງກິດ, ຝຣັ່ງ
- ຕຳແໜ່ງ: ກຳມະການອິດສະຫຼະ
- ປະຫວັດການສຶກສາ: ມະຫາວິທະຍາໄລຈອດສ໌ທາວທີ່ນະຄອນວໍຊິງຕັນປະເທດສະຫະລັດອາເມລິກາ, ສະຖາບັນຄຸ້ມຄອງທະນາຄານແຫ່ງອິນເດຍ ທີ່ເມືອງປານາ ປະເທດອິນເດຍ ແລະ ລະດັບປະລິນຍາຕີ ຈາກປະເທດ ອິດສະຕາລີ, ມະຫາວິທະຍາໄລນິວຊາວເວ.

❖ ທ່ານ ປະສົມເພັດ ຄຳຕັນ: ສະມາຊິກ



- ວັນເດືອນປີເກີດ: 25/05/1970
- ສັນຊາດ: ລາວ
- ພາສາ: ລາວ, ອັງກິດ
- ຕຳແໜ່ງ: ຮອງຫົວໜ້າກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ປະກັນໄພ, ກະຊວງການເງິນ
- ລະດັບການສຶກສາ: ປະລິນຍາໂທເສດຖະກິດ-ທຸລະກິດ ທີ່ວິທະຍາໄລກຸງຣີ, ປະເທດ ສ ເກົາຫຼີ; ປະລິນຍາຕີຄຸ້ມຄອງກົນຈັກ ທີ່ມະຫາວິທະຍາໄລສັບພະວິຊາ 2 ທັນວາ ສປປ ລາວ.

❖ **ທ່ານ Stephane MANGIAVACCA: ສະມາຊິກ**



- ວັນເດືອນ ປີເກີດ: 11/07/1975
- ສັນຊາດ: ຝຣັ່ງ
- ພາສາ: ຝຣັ່ງ, ອັງກິດ, ສະເປນ, ຈີນ ແລະ ຍີ່ປຸ່ນ
- ຕຳແໜ່ງ: ຫົວໜ້າຝ່າຍທຸລະກິດຕ່າງປະເທດ, ຕາງໜ້າທະນາຄານ COFIBRED ໃນນາມຄູ່ຮ່ວມຍຸດທະສາດ ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.
- ລະດັບການສຶກສາ: ສຶກສາທີ່ມະຫາວິທະຍາໄລ Ecole Nationale Superieure des Mines de Saint-Etienne, ຈົບປະລິນຍາຕີເສດຖະສາດ, ຈົບຊັ້ນສູງສາຂາ ວິສະວະກຳສາດ ດ້ວຍກຽດນິຍົມ ແລະ ເຂົ້າຮ່ວມໂຄງການແລກປ່ຽນກ່ຽວກັບວິສະວະກຳສິ່ງແວດລ້ອມ ທີ່ University of New Brunswick ປະເທດ Canada.

❖ **ທ່ານ ຣສ ທອງເພັດ ຈັນທະນີວົງ: ສະມາຊິກອົດສະຫຼະ**



- ວັນເດືອນປີເກີດ: 20/04/1962
- ສັນຊາດ: ລາວ
- ພາສາ: ລາວ, ອັງກິດ
- ຕຳແໜ່ງ: ຮອງຄະນະບໍດີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ
- ລະດັບການສຶກສາ: ປະລິນຍາເອກດ້ານການບັນຊີ (PhD Candidate 2021) ຢູ່ມະຫາວິທະຍາໄລສີປະທຸມ, ປະເທດໄທ; ໄດ້ຮັບປະກາດສະນີຍະບັດນັກຊ່ຽວຊານບັນຊີລາວ; ປະລິນຍາໂທດ້ານການພົວພັນສາກົນຢູ່ມະຫາວິທະຍາໄລ De Mons ປະເທດແບນຊິກ; ປະລິນຍາໂທດ້ານບໍລິຫານທຸລະກິດ ຈາກມະຫາວິທະຍາໄລເທັກໂນໂລຢີແຫ່ງເອເຊຍ (AIT) ປະເທດໄທ; ປະລິນຍາຕີດ້ານການບໍລິຫານທຸລະກິດໂຄງການຮ່ວມມືສະຖາບັນການເມືອງການປົກຄອງແຫ່ງຊາດ ແລະ ມະຫາວິທະຍາໄລເທັກໂນໂລຢີແຫ່ງເອເຊຍ (AIT) ປະເທດໄທ; ປະລິນຍາຕີດ້ານຄະນິດສາດ-ຟີຊິກສາດ, ມະຫາວິທະຍາໄລແຫ່ງຊາດ.

❖ **ທ່ານ ນ. ລັດດາວັນ ຊົງວິໄລ: ສະມາຊິກອົດສະຫຼະ**



- ວັນເດືອນປີເກີດ: 27/04/1982
- ສັນຊາດ: ລາວ
- ພາສາ: ລາວ, ອັງກິດ
- ຕຳແໜ່ງ: ຮັກສາການຫົວໜ້າ ສູນຄົ້ນຄວ້ານະໂຍບາຍເສດຖະກິດ ມະຫາພາກ ແລະ ປັບປຸງໂຄງສ້າງເສດຖະກິດ.
- ລະດັບການສຶກສາ: ປະລິນຍາໂທດ້ານນະໂຍບາຍບໍລິຫານພາກລັດ ຢູ່ສະຖາບັນ GRIPS, ປະເທດຍີ່ປຸ່ນ; ປະລິນຍາຕີດ້ານເສດຖະສາດ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ; ນັກສຶກສາແລກປ່ຽນມະຫາວິທະຍາໄລແຫ່ງຊາດສິງກະໂປ, ປະເທດສິງກະໂປ.

❖ **ທ່ານ ສອນໄຊ ສີລາເພັດ: ສະມາຊິກອົດສະຫຼະ**



- ວັນເດືອນປີເກີດ: 01/01/1977
- ສັນຊາດ: ລາວ
- ພາສາ: ລາວ, ອັງກິດ
- ຕຳແໜ່ງ: ປະທານສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ
- ລະດັບການສຶກສາ: ປະລິນຍາເອກດ້ານການບັນຊີ (PhD Candidate) ຢູ່ມະຫາວິທະຍາໄລສີປະທຸມ, ປະເທດໄທ; ເປັນສະມາຊິກຂອງ CPA ລາວ ແລະ CPA ອົດສະຕາລີ; ປະລິນຍາໂທດ້ານການເງິນ ຢູ່ວິທະຍາໄລເທັກໂນໂລຍີສັນຕິພົນ, ປະເທດໄທ; ປະລິນຍາຕີດ້ານບໍລິຫານທຸລະກິດ ວິທະຍາໄລຄອມເຊັນເຕີ; ເປັນສະມາຊິກຂອງ Lao Institute of Chartered Public Accountants (LICPA); ສຶກສາລະດັບຊັ້ນສູງ ດ້ານການບັນຊີ ຢູ່ວິທະຍາໄລປາກປ່າສັກ.

❖ **ທ່ານ ວຽງສຸກ ຈຸນທະວົງ: ສະມາຊິກ**



- ວັນເດືອນປີເກີດ: 15/08/1964
- ສັນຊາດ: ລາວ
- ພາສາ: ລາວ, ອັງກິດ ແລະ ເຊັກໂກ
- ຕຳແໜ່ງ: ຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
- ລະດັບການສຶກສາ: ບໍລຸງທິດສະດີການເມືອງ 45 ວັນຈາກໂຮງຮຽນ ການເມືອງ – ການປົກຄອງ ແລະ ປະລິນຍາໂທ ສາຂາເສດຖະກິດການຄ້າຈາກສາທາລະນະລັດເຊັກ.

2. ໂຄງຮ່າງການຈັດຕັ້ງຂອງຄະນະອຳນວຍການ

ຄະນະອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ນະວັນທີ 30 ກັນຍາ 2022 ປະກອບ ມີ 6 ທ່ານ:

- ທ່ານ ນ. ສາຍສະໝອນ ຈັນທະຈັກ ຜູ້ອຳນວຍການ
- ທ່ານ ກົງສັກ ສຸພອນສີ ຮອງຜູ້ອຳນວຍການ
- ທ່ານ ນັນທະລາດ ແກ້ວປະເສີດ ຮອງຜູ້ອຳນວຍການ
- ທ່ານ ວຽງສຸກ ຈຸນທະວົງ ຮອງຜູ້ອຳນວຍການ
- ທ່ານ ນ. ບົວໄພວັນ ນັນດາວົງ ຮອງຜູ້ອຳນວຍການ
- ທ່ານ ສາຍຈິດ ສິມມະວົງ ຮອງຜູ້ອຳນວຍການ





3. ການເຄື່ອນໄຫວຂອງສະພາບໍລິຫານ ແລະ ຄະນະກຳມະການທີ່ຂຶ້ນກັບສະພາບໍລິຫານ

3.1 ກອງປະຊຸມສະພາບໍລິຫານ

ໃນໄລຍະໄຕມາດ 3 ປີ 2022 ສະພາບໍລິຫານ ທຄຕລ ໄດ້ດຳເນີນກອງປະຊຸມສະໄໝວິສາມັນ 2 ສາມາດ ສັງລວມການເຄື່ອນໄຫວທີ່ສຳຄັນໄດ້ດັ່ງນີ້:

- ຮັບຮອງການຍົກຍ້າຍ ແລະ ການແຕ່ງຕັ້ງຜູ້ບໍລິຫານຂັ້ນສູງຂອງ ທຄຕລ ຄື: ຮັບຮອງການຍົກຍ້າຍ **ທ່ານ ຄຳພຸດ ສິດທິລາດ** ຜູ້ອຳນວຍການຄົນເກົ່າ ແລະ **ທ່ານ ນາລິນ ສີລະວົງສິດ** ຮອງຜູ້ອຳນວຍການ ໄປ ຮັບໜ້າທີ່ໃໝ່ຢູ່ທະນາຄານແຫ່ງ ສປປລາວ; ຮັບຮອງການແຕ່ງຕັ້ງ ທ່ານ **ນ. ສາຍສະໝອນ ຈັນທະຈັກ** ເປັນຜູ້ອຳນວຍ ການ ທຄຕລ;
- ຮັບຮອງໃຫ້ ທຄຕລ ເປັນທະນາຄານຕົວແທນເພື່ອການຊຳລະໃນວຽກງານຫຼັກຊັບ;
- ຮັບຮອງເອກະສານລາຍງານການເງິນ ປະຈຳ 06 ເດືອນຕົ້ນປີ 2022 ທີ່ຜ່ານການທົບທວນຈາກຜູ້ກວດສອບ ອິດສະຫຼະ (PWC) ຜ່ານຈົດໝາຍວຽນ.

3.2 ຄະນະກຳມະການຄຸ້ມຄອງຄວາມສ່ຽງ

ຄະນະກຳມະການ ໄດ້ເອົາໃຈໃສ່ໃນການໃຫ້ຄຳແນະນຳໃນການຄົ້ນຄວ້າ ແລະ ກຳນົດບັນດາລະບຽບການ ແລະ ນະໂຍບາຍດ້ານການຄຸ້ມຄອງຄວາມສ່ຽງ. ພ້ອມທັງໄດ້ພິຈາລະນາຮັບຮອງເອົາບັນດານະໂຍບາຍ ແລະ ກົດ ລະບຽບທີ່ຕິດພັນກັບວຽກງານຄຸ້ມຄອງຄວາມສ່ຽງ, ຕິດຕາມບັນດາໂຄງການບາເຊວ 2. ໃນໄລຍະໄຕມາດ 3 ປີ 2022 ຄະນະກຳມະການໄດ້ດຳເນີນກອງປະຊຸມ 1 ຄັ້ງ ເຊິ່ງໄດ້ປຶກສາຫາລື ແລະ ຮັບຮອງບາງເນື້ອໃນທີ່ສຳຄັນ ດັ່ງນີ້:

- ຮັບຊາບຕໍ່ການລາຍງານການຄຸ້ມຄອງຄວາມສ່ຽງຂອງ ທຄຕລ ແລະ ເຫັນດີຕໍ່ກັບແນວທາງການແກ້ໄຂ ບັນຫາ ມອບໃຫ້ ທຄຕລ ສືບຕໍ່ໃນການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ;
- ຮັບຊາບຕໍ່ການລາຍງານການຈັດຕັ້ງປະຕິບັດວຽກງານບາເຊວ 2 ຂອງ ທຄຕລ ແລະ ມອບໃຫ້ຄະນະ ຮັບຜິດຊອບ ຈັດສຳມະນາເຜີຍແຜ່ໃຫ້ພະນັກງານຂອງພະແນກ, ສູນ ແລະ ສາຂາ ທີ່ກ່ຽວຂ້ອງໃຫ້ທົ່ວເຖິງ;
- ພິຈາລະນາ ແລະ ຮັບຮອງ ການປັບປຸງນະໂຍບາຍວ່າດ້ວຍການຄຸ້ມຄອງຄວາມສ່ຽງດ້ານການດຳເນີນງານ ທຄຕລ;

3.3 ຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ

ສະພາບໍລິຫານ ທຄຕລ ໄດ້ຕົກລົງໂຮມວຽກງານຂອງຄະນະກຳມະການຄັດເລືອກ ແລະ ຄະນະກຳມະ ການກຳນົດຄ່າຕອບແທນເຂົ້າກັນເປັນຄະນະກຳມະການດຽວ ຮຽກວ່າ ຄະນະກຳມະການຄັດເລືອກ ແລະ ກຳນົດ ຄ່າຕອບແທນນັບແຕ່ຕົ້ນປີ 2022. ຄະນະກຳມະການດັ່ງກ່າວ ໄດ້ເອົາໃຈໃສ່ໃນການຄົ້ນຄວ້າພິຈາລະນາຮັບຮອງ ເອົາລະບຽບນະໂຍບາຍ ຂອງ ທຄຕລ ທີ່ຕິດພັນກັບວຽກງານແຕ່ງຕັ້ງ ແລະ ຊັບຊ້ອນໝູນວຽນບັນດາຕຳແໜ່ງ ບໍລິຫານສຳຄັນ ແລະ ຄ່າຕອບແທນສຳລັບຄະນະຜູ້ບໍລິຫານ ແນໃສ່ຜົນປະໂຫຍດຂອງ ທຄຕລ ແລະ ຜູ້ຖືຮຸ້ນ ຊຶ່ງ ຄະນະກຳມະການໄດ້ຄົ້ນຄວ້າບັນດາລະບຽບການຕ່າງໆ ເພື່ອໃຫ້ສາມາດນຳສະເໜີຮັບຮອງຜ່ານສະພາບໍລິຫານ ທຄຕລ ຕາມຂັ້ນຕອນ.

3.4 ຄະນະກຳມະການຄຸ້ມຄອງບໍລິຫານ

ຄະນະກຳມະການຄຸ້ມຄອງບໍລິຫານ ໄດ້ເປີດກອງປະຊຸມເພື່ອຄົ້ນຄວ້າພິຈາລະນາຮັບຮອງຜົນການດຳເນີນ ງານຂອງ ທຄຕລ ແລະ ບັນຫາຕ່າງໆ ທີ່ຈະສະເໜີຜ່ານສະພາບໍລິຫານ ຈຳນວນ 1 ຄັ້ງ ເຊິ່ງໄດ້ຮັບຮອງບາງເນື້ອ ໃນທີ່ສຳຄັນດັ່ງນີ້:

- ຄະນະກຳມະການໄດ້ຕິດຕາມຊຸກຍູ້ໃຫ້ທີດຊີ້ນຳຕໍ່ຜົນການດຳເນີນທຸລະກິດຂອງ ທຄຕລ ເປັນປະຈຳ ຢ່າງ ໃກ້ຊິດ ໂດຍສະເພາະແມ່ນວຽກງານການຂະຫຍາຍສິນເຊື່ອ, ການເກັບກູ້ໜີ້ NPL ແລະ ວຽກງານການ ບໍລິຫານທຶນແຕ່ລະໄລຍະ.

- ຕິດຕາມການຈັດຕັ້ງປະຕິບັດຜົນການດຳເນີນທຸລະກິດ, ແຜນດຳເນີນງານປະຈຳປີ, ແຜນຍຸດທະສາດໄລຍະຍາວ ແລະ ການປະຕິບັດແຜນງານ, ໂຄງການຕ່າງໆ;
- ຕິດຕາມວຽກງານການບໍລິຫານ ແລະ ການພັດທະນາບຸກຄະລາກອນ ຂອງ ທຄຕລ;
- ມອບໃຫ້ ທຄຕລ ຄົ້ນຄວ້າການປະຕິບັດຖານະການເງິນມາດຖານສາກົນ (IFRS) ມາດຖານດຽວ ແລະ ສະເໜີຫາ ທະນາຄານແຫ່ງ ສປປ ລາວ ເພື່ອຂໍຍົກເວັ້ນມາດຖານທີ່ບໍ່ສາມາດປະຕິບັດໄດ້;
- ມອບໃຫ້ ທຄຕລ ເອົາໃຈໃສ່ໃນການປະຄັບປະຄອງລູກຄ້າ ເລັ່ງການປະສານງານກັບສູນເກັບຊື້ໜີ້ ແລະ ບໍລິສັດເກັບຊື້ໜີ້ ເພື່ອຫາວິທີແກ້ໄຂ NPL ຂອງ ທຄຕລ;
- ຮັບຮອງການກະກຽມກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝວິສາມັນ ປະຈຳປີ 2022.

3.5 ຄະນະກຳມະການກວດສອບ

- ຕິດຕາມພະນັກງານໃນການປະຕິບັດລະບຽບ, ສິດ ແລະ ຂັ້ນຕອນໃນການປະຕິບັດວຽກງານ, ເອົາໃຈໃສ່ໃນວຽກງານການກວດກາສຸກເສີນ, ເຝົ້າລະວັງບັນຫາຂໍ້ພິບເຫັນຕ່າງໆ ແລະ ການຕຳນິສິ່ງຂ່າວຈາກລູກຄ້າ, ເພື່ອໃຫ້ຮັບປະກັນແກ້ໄຂບັນຫາໃຫ້ທັນການ. ຕິດຕາມການປະຕິບັດສິດການປ່ອຍສິນເຊື່ອຂອງສາຂາ ແລະ ການນຳໃຊ້ມາດຕະການແກ້ໄຂບັນຫາຕ່າງໆໃຫ້ເໝາະສົມ;
- ດຳເນີນການກວດກາປົກກະຕິໄດ້ 52 ພາກສ່ວນ, ກວດກາສະເພາະກິດ 1 ຄັ້ງ, ກວດກາສະເພາະດ້ານ ແລະ ກວດກາສຸກເສີນ 91 ຄັ້ງ. ພ້ອມທັງຕິດຕາມການແກ້ໄຂຂໍ້ພິບເຫັນຈາກກວດກາພາຍໃນ-ພາຍນອກ ຂອງບັນດາພະແນກ, ສາຂາ ທຄຕລ ທົ່ວລະບົບ;
- ສຳເລັດການສະໜອງຂໍ້ມູນໃຫ້ຄະນະກວດກາຈາກກົມຄຸ້ມຄອງລະບົບຊຳລະສະສາງ ທະນາຄານແຫ່ງ ສປປ ລາວ ໃນການລົງກວດກາ ແລະ ເກັບກຳຂໍ້ມູນສະເພາະດ້ານໃນການໃຫ້ບໍລິການເງິນເອເລັກໂຕຣນິກ ປະຈປີ 2022;
- ສຳເລັດການປະສານງານ ແລະ ສະໜອງຂໍ້ມູນ ໃຫ້ແກ່ອົງການກວດສອບແຫ່ງລັດ ສຳລັບການກວດສອບເອກະສານລາຍງານການເງິນ ທຄຕລ ປະຈຳປີ 2021;
- ຮັບຮອງເອກະສານລາຍງານການເງິນ ປະຈຳ 06 ເດືອນຕົ້ນປີ 2022 ຕາມມາດຖານລາວ ແລະ ມາດຕະຖານສາກົນ ຫຼັງການທົບທວນ ເພື່ອນຳສະເໜີສະພາບໍລິຫານຮັບຮອງ.

V. ຄວາມຮັບຜິດຊອບໃນສັງຄົມ:

1. ການມອບພັນທະຕ່າງໆຂອງ ທຄຕລ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ປະຕິບັດຕາມລະບຽບກົດໝາຍສ່ວຍສາອາກອນ ຊຶ່ງໄດ້ມອບພັນທະອາກອນຕ່າງໆ ໃຫ້ແກ່ລັດຖະບານ ໃນໄລຍະ 9 ເດືອນປີ 2022 ລວມເປັນຈຳນວນເງິນທັງໝົດ 19.606 ລ້ານກີບ ມີລາຍລະອຽດລຸ່ມນີ້:

ຫົວໜ່ວຍ: ລ້ານກີບ

ລ/ດ	ເນື້ອໃນ	9 ເດືອນປີ 2022	ປີ 2021
1	ອາກອນກຳໄລ	-	31.000
2	ອາກອນມູນຄ່າເພີ້ມ	2.524	8.627
3	ອາກອນລາຍໄດ້ພະນັກງານ	15.161	24.759
4	ອາກອນຊົມໃຊ້	-	-
5	ອາກອນກຳໄລນິຕິບຸກຄົນຜູ້ທີ່ບໍ່ມີພູມລຳເນົາ ຢູ່ ສປປ ລາວ	449	1.469
6	ອາກອນອື່ນໆ	1.471	5.263
ລວມທັງໝົດ		**19.606**	**71.118**

2. ການມີສ່ວນຮ່ວມໃນວຽກງານສັງຄົມ ແລະ ອຸປະຖຳສັງຄົມ

ຄຽງຄູ່ກັບການດຳເນີນທຸລະກິດ ແລະ ປະຕິບັດວຽກງານດ້ານອື່ນໆ, ຄະນະຜູ້ບໍລິຫານ ແລະ ພະນັກງານ ຂອງ ທຄຕລ ທຸກຄົນ ລ້ວນແຕ່ໄດ້ເອົາໃຈໃສ່ໃນການປະກອບສ່ວນ ແລະ ມີສ່ວນຮ່ວມໃນໂຄງການຄວາມຮັບຜິດຊອບຕໍ່ສັງຄົມ (Corporate Social Responsibility ຫຼື CSR) ເຊິ່ງເປັນໜຶ່ງໃນບັນດາຄຸນຄ່າຫຼັກຂອງ ທຄຕລ ເຊິ່ງມີລາຍລະອຽດລຸ່ມນີ້:

ການນຳໃຊ້ທ່າແຮງທາງດ້ານເທັກໂນໂລຢີ ແລະ ຄວາມທັນສະໄໝຂອງ ທຄຕລ ໃນການພັດທະນາຜະລິດຕະພັນມາຮັບໃຊ້ສັງຄົມ ເຊັ່ນ: BCEL One Heart ເຊິ່ງເຮັດໜ້າທີ່ເປັນເຄື່ອງມື ແລະ ເປັນສື່ກາງໃນການຮັບບໍລິຈາກເງິນຊ່ວຍເຫຼືອສັງຄົມ ທີ່ອຳນວຍຄວາມສະດວກໃຫ້ທັງຜູ້ຂໍຮັບບໍລິຈາກ ແລະ ຜູ້ສະໜັກໃຈບໍລິຈາກ ທີ່ໄດ້ເປີດຮັບບໍລິຈາກ ພາຍໃນ 9 ເດືອນປີ 2022 ໄດ້ 3 ໂຄງການ ຄື: ໂຄງການລະດົມທຶນເພື່ອສະໜອງການປິ່ນປົວທີ່ມີຄຸນນະພາບໃຫ້ແກ່ລູກຫຼານໃນພາກເໜືອ; ໂຄງການສົມທົບຊ່ວຍເຫຼືອມູນນິທິຮ່ວມໃຈຊ່ວຍເຫຼືອຜູ້ປະສົບໄພ ນະຄອນຫຼວງວຽງຈັນ 1630 ແລະ ໂຄງການລະດົມທຶນຊ່ວຍເຫຼືອຟື້ນຟູຜົນກະທົບຈາກໄພພິບັດນ້ຳຖ້ວມ ຢູ່ ເມືອງໄຊ, ເມືອງຫຼາ, ເມືອງນາໝໍ້ ແລະ ເມືອງງາ ແຂວງອຸດົມໄຊ ເຊິ່ງມີຜູ້ຮ່ວມບໍລິຈາກທັງໝົດ 1.867 ຄົ້ງ, ເປັນຈຳນວນເງິນ 229,95 ລ້ານກີບ.

ພ້ອມດຽວກັນນັ້ນ, ທຄຕລ ໄດ້ປະກອບສ່ວນຊຸກຍູ້ ແລະ ຊ່ວຍເຫຼືອສັງຄົມຜ່ານຫຼາຍຮູບການ ເປັນຕົ້ນ ແມ່ນ ການອຸປະຖຳວຽກງານການສຶກສາ ແລະ ກິລາ, ວຽກງານສາທາລະນະສຸກ, ຊ່ວຍເຫຼືອຜູ້ປະສົບໄພທຳມະຊາດ, ຊຸກຍູ້ວັນບຸນສຳຄັນຕ່າງໆຂອງຊາດ ແລະ ອື່ນໆ ດ້ວຍການມອບເງິນສົດ, ວັດຖຸອຸປະກອນຕ່າງໆ ພາຍໃນ 9 ເດືອນປີ 2022 ຈຳນວນ 39 ລາຍການ ເປັນຈຳນວນເງິນທັງໝົດ 278,32 ລ້ານກີບ.

ຜູ້ອຳນວຍການ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ນັນທະລາດ ແກ້ວປະເສີດ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເອກະສານລາຍງານການເງິນ (ກ່ອນການກວດສອບ)

ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2022

ສາລະບານ **ໜ້າ**

ໃບລາຍງານຜົນການດຳເນີນງານ **1**

ໃບລາຍງານຜົນການດຳເນີນງານສັງລວມ **2**

ໃບລາຍງານຖານະການເງິນ **3**

ໃບລາຍງານສ່ວນປ່ຽນແປງທຶນ **4**

ໃບລາຍງານກະແສເງິນສົດ **5–6**

ບົດອະທິບາຍຊ້ອນທ້າຍຂອງເອກະສານລາຍງານການເງິນ ໂດຍຫຍໍ້ **7–20**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານ (ກ່ອນການກວດສອບ)
ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2022

	ບິດ ອະທິບາຍ	ສຳລັບໄລຍະສາມ ເດືອນຂອງໄຕມາດ ທີ III ທີ່ສິ້ນສຸດວັນ ທີ 30 ກັນຍາ 2022 ລ້ານກີບ	ສຳລັບໄລຍະສາມ ເດືອນຂອງໄຕມາດ ທີ III ທີ່ສິ້ນສຸດວັນ ທີ 30 ກັນຍາ 2021 ລ້ານກີບ
ລາຍຮັບດອກເບ້ຍ		691.165	616.154
ລາຍຈ່າຍດອກເບ້ຍ		(471.356)	(372.524)
ລາຍຮັບສຸດທິຈາກດອກເບ້ຍ	5	**219.809**	**243.630**
ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ		140.602	77.341
ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ		(11.676)	(9.297)
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	6	**128.926**	**68.044**
ກຳໄລ(ຂາດທຶນ)ສຸດທິ ຈາກການຊື້-ຂາຍເງິນຕາຕ່າງປະເທດ		21.125	23.520
ຂາດທຶນສຸດທິ ຈາກການຊື້-ຂາຍເອກະສານອານຸພັນ		-	(893)
ລາຍຮັບອື່ນໆຈາກການດຳເນີນງານ		10.767	25.477
ລວມລາຍຮັບຈາກການດຳເນີນງານ		**380.627**	**359.778**
ລາຍຈ່າຍໃນການສູນເສຍຂອງເງິນໃຫ້ກູ້ຢືມແກ່ລູກຄ້າ		(175.817)	(264.301)
ການສູນເສຍຄ່າເສື່ອມມູນຄ່າຂອງການລົງທຶນການເງິນ		1.918	6.520
ລາຍຮັບສຸດທິຈາກການດຳເນີນງານ		**206.728**	**101.997**
ລາຍຈ່າຍບຸກຄະລາກອນ		(70.224)	(51.179)
ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ		(40.661)	(22.317)
ຄ່າຫຼ້ຍຫ້ຽນຂອງສິດນຳໃຊ້ຊັບສິນ		(28.548)	(1.928)
ລາຍຈ່າຍອື່ນໆໃນການດຳເນີນງານ	7	(49.106)	(43.883)
ລວມລາຍຈ່າຍໃນການດຳເນີນງານ		**(188.539)**	**(119.307)**
ສ່ວນແບ່ງກຳໄລ(ຂາດທຶນ)ໃນວິສາຫະກິດຂຸ້ນ ແລະ ວິສາຫະກິດປະສົມ		10.159	10.173
ກຳໄລກ່ອນອາກອນ		**28.348**	**(7.137)**
ລາຍຈ່າຍອາກອນກຳໄລ		9.089	14.748
ອາກອນເຍື້ອນຊຳລະ		-	1.105
ກຳໄລສຸດທິພາຍໃນໄລຍະ		**37.437**	**8.716**
ກຳໄລຕໍ່ຮຸ້ນ (ກີບ)	8	180	42

ກະກຽມໂດຍ:

ທ່ານ ນ. ພຸແສງທອງ ອານຸລັກຄຳ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ຄຳໝອນ ອັນຊະນະ
ຮອງຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ສາຍຈິດ ສິມມະວົງ
ຮອງຜູ້ອຳນວຍການ

ນະຄອນຫລວງວຽງຈັນ, ສປປ ລາວ
ວັນທີ: 01 ພະຈິກ 2022

ບິດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ໜ້າທີ 7 ຫາ 20 ແມ່ນຖືເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນເຫຼົ່ານີ້.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານສັງລວມ (ກ່ອນການກວດສອບ)
ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2022

	ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2022 ລ້ານກີບ	ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2021 ລ້ານກີບ
ກຳໄລສຸດທິພາຍໃນໄລຍະ	**37.437**	**8.716**
ລາຍຮັບໆ		
ການສູນເສຍການປະເມີນຄືນຜົນປະໂຫຍດພະນັກງານຫຼັງອອກການທີ່ກຳນົດໄວ້	(5.829)	2.630
ລາຍຈ່າຍ(ລາຍຮັບ) ພາຍໃນໄລຍະ, ສຸດທິຈາກອາກອນ	**(5.829)**	**2.630**
ລວມລາຍຮັບອື່ນ ພາຍໃນໄລຍະ, ສຸດທິຈາກອາກອນ	**31.608**	**11.346**

ກະກຽມໂດຍ:

ທ່ານ ນ. ພຸແສງທອງ ອານຸລັກຄຳ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ຄຳໝອນ ວັນຊະນະ
ຮອງຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ສາຍຈິດ ສົມມະວົງ
ຮອງຜູ້ອຳນວຍການ

ນະຄອນຫລວງວຽງຈັນ, ສປປ ລາວ
ວັນທີ: 01 ພະຈິກ 2022

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ໜ້າທີ 7 ຫາ 20 ແມ່ນຖືເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ ເຫຼົ່ານີ້.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຖານະການເງິນ (ກ່ອນການກວດສອບ)
ໃນວັນທີ 30 ກັນຍາ 2022

	ບົດອະທິບາຍ	30 ກັນຍາ 2022 ລ້ານກີບ	31 ທັນວາ 2021 ລ້ານກີບ
ຊັບສິນ			
ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ		22.387.624	19.022.276
ເງິນຝາກຢູ່ທະນາຄານອື່ນ	9	11.544.847	9.182.845
ເງິນໃຫ້ກູ້ຢືມແກ່ລູກຄ້າ	10	44.887.718	32.372.070
ການລົງທຶນທາງການເງິນ – ປະເພດມີໄວ້ເພື່ອຂາຍ	11	90.123	91.657
ການລົງທຶນທາງການເງິນ – ປະເພດຖືໄວ້ຈົນຄົບກຳນົດ	12	5.315.517	5.273.352
ການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	13	670.447	643.318
ຊັບສິນບັດຄົງທີ່ ແລະ ອຸປະກອນ	14	557.820	563.503
ຊັບສິນບັດຄົງທີ່ບໍ່ມີຕົວຕົນ	15	284.632	293.321
ສິດໃນການນຳໃຊ້ຊັບສິນ		54.444	55.713
ອາກອນຊັບສິນເຍື່ອນຊຳລະ		37.015	37.015
ອາກອນກຳໄລລ່ວງໜ້າ		24.559	24.015
ຊັບສິນອື່ນໆ		798.026	677.906
ລວມຊັບສິນ		**86.652.772**	**68.236.991**
ໜີ້ສິນ ແລະ ທຶນ			
ໜີ້ສິນ			
ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນໆ	16	6.973.562	5.269.436
ໜີ້ຕ້ອງສົ່ງໃຫ້ລູກຄ້າ	17	73.440.610	57.169.169
ເງິນກູ້ຢືມຈາກທະນາຄານອື່ນ	18	3.747.288	3.354.623
ໜີ້ຕ້ອງສົ່ງອາກອນໃນປີ		880	-
ໜີ້ຕ້ອງສົ່ງສັນຍາເຊົ່າ		26.292	29.595
ໜີ້ສິນອື່ນໆ		324.845	282.022
ລວມໜີ້ສິນ		**84.513.478**	**66.104.845**
ທຶນ			
ທຶນຈົດທະບຽນ	19	1.038.617	1.038.617
ຄັງສະສົມຕາມລະບຽບການ	20	836.635	831.667
ລາຍການສ້ຽລວມອື່ນໆ		(6.175)	11.416
ກຳໄລສະສົມ		270.217	250.446
ລວມທຶນ		**2.139.294**	**2.132.146**
ລວມໜີ້ສິນ ແລະ ທຶນ		**86.652.772**	**68.236.991**

ກະກຽມໂດຍ:	ອະນຸມັດໂດຍ:	ອະນຸມັດໂດຍ:
ທ່ານ ນ. ພຸແສງທອງ ອານຸລັກຄຳ	ທ່ານ ຄຳໝອນ ວັນຊະນະ	ທ່ານ ສາຍຈິດ ສົມມະວົງ
ຫົວໜ້າພະແນກບັນຊີສ້ຽລວມ	ຮອງຫົວໜ້າພະແນກກວດກາພາຍໃນ	ຮອງຜູ້ອຳນວຍການ

ນະຄອນຫລວງວຽງຈັນ, ສປປ ລາວ
ວັນທີ: 01 ພະຈິກ 2022

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ໜ້າທີ 7 ຫາ 20 ແມ່ນຖືເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ ເຫຼົ່ານີ້.

ໃບລາຍງານສ່ວນປ່ຽນແປງທຶນ (ກ່ອນການກວດສອບ)
ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2022

	ທຶນຈົດທະບຽນ ລ້ານກີບ	ຄ້ຳສະສົມຕາມລະບຽບການ ລ້ານກີບ	ການປະເມີນຄືນຜົນປະໂຫຍດພະນັກງານຫຼັງອອກການທີ່ກຳນົດໄວ້ ລ້ານກີບ	ຜົດຕ່ຽງຈາກການຕີມູນຄ່າຫຼັກຊັບຄືນໃໝ່ ລ້ານກີບ	ກຳໄລສະສົມ ລ້ານກີບ	ລວມ ລ້ານກີບ
ຍອດເຫຼືອໃນວັນທີ 31 ທັນວາ 2021	**1.038.617**	**831.667**	**9.882**	**1.534**	**250.446**	**2.132.146**
ກຳໄລສຸດທິພາຍໃນໄລຍະ	-		-	-	24.739	24.739
ການຈັດສັນຄັ້ງສຳຮອງໃນໄລຍະ	-	4.968	-	-	(4.968)	-
ການປະເມີນຄືນຜົນປະໂຫຍດພະນັກງານຫຼັງອອກການທີ່ກຳນົດໄວ້	-	-	(16.057)	-	-	(16.057)
ຜົດຕ່ຽງຈາກການຕີມູນຄ່າຫຼັກຊັບຄືນໃໝ່	-	-	-	(1.534)	-	(1.534)
ຍອດເຫຼືອໃນວັນທີ 30 ກັນຍາ 2022	**1.038.617**	**836.635**	**(6.175)**	**-**	**270.217**	**2.139.294**

ກະກຽມໂດຍ:

ທ່ານ ນ. ພຸເສງທອງ ອານຸລັກຄຳ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ຄຳໝອນ ວັນຊະນະ
ຮອງຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ສາຍຈິດ ສີມມະວົງ
ຮອງຜູ້ອຳນວຍການ

ນະຄອນຫລວງວຽງຈັນ, ສປປ ລາວ
ວັນທີ: 01 ພະຈິກ 2022

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ໜ້າທີ 7 ຫາ 20 ແມ່ນຖືເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ ເຫຼົ່ານີ້.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານກະແສເງິນສົດ (ກ່ອນການກວດສອບ)
ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2022

	ບົດອະທິບາຍ	ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2022 ລ້ານກີບ	ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2021 ລ້ານກີບ
ກິດຈະກຳການດຳເນີນງານ			
ກຳໄລກ່ອນຫັກອາກອນ		**28.348**	**(7.137)**
ດັດແກ້ສຳລັບ:			
ລາຍຈ່າຍຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ	14,15	31.636	22.317
ຄ່າຫຼ້ຽຫ້ຽນສິດຂອງການໃຊ້ຊັບສິນ		1.951	1.928
ລາຍຈ່າຍຄ່າເສື່ອມມູນຄ່າ	10	175.817	264.301
ການສູນເສຍມູນຄ່າໃນການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ		(1.918)	(6.520)
ສ່ວນແບ່ງກຳໄລແລະຂາດທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	13	(10.159)	(10.173)
ລາຍຈ່າຍຜົນປະໂຫຍດພະນັກງານຫຼັງອອກການທີ່ກຳນົດໄວ້		(3.010)	3.128
ຂາດທຶນຈາກການຂາຍ/ສະສາງຊັບສິນຄົງທີ່		(3)	12
ຂາດທຶນຈາກອັດຕາແລກປ່ຽນທີ່ຍັງບໍ່ໄດ້ເກີດຂຶ້ນຈິງ		944.081	288.846
ລາຍຮັບດອກເບ້ຍ		(691.165)	(616.154)
ລາຍຈ່າຍດອກເບ້ຍ		471.356	372.524
ກະແສເງິນສົດຈາກ ກຳໄລຈາກການດຳເນີນງານກ່ອນການປ່ຽນແປງດ້ານຊັບສິນ ແລະ ໜີ້ສິນ		**946.934**	**313.072**
ສ່ວນປ່ຽນແປງໃນຊັບສິນຈາກການດຳເນີນງານ			
ສ່ວນປ່ຽນແປງເງິນຝາກຢູ່ທະນາຄານອື່ນສຸດທິ		297.686	269.161
ສ່ວນປ່ຽນແປງເງິນໃຫ້ກູ້ຢືມແກ່ລູກຄ້າສຸດທິ		(3.874.464)	(1.962.676)
ສ່ວນປ່ຽນແປງການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ		-	16.296
ອາກອນກຳໄລລ່ວງໜ້າ		(323)	-
ສ່ວນປ່ຽນແປງໃນຊັບສິນອື່ນໆ		(133.563)	(16.556)
ສ່ວນປ່ຽນແປງໃນໜີ້ສິນຈາກການດຳເນີນງານ			
ສ່ວນປ່ຽນແປງໃນໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນໆສຸດທິ		353.452	194.404
ສ່ວນປ່ຽນແປງໃນໜີ້ຕ້ອງສົ່ງໃຫ້ລູກຄ້າສຸດທິ		2.663.294	3.466.745
ສ່ວນປ່ຽນແປງໃນເງິນກູ້ຢືມຈາກທະນາຄານອື່ນສຸດທິ		(1.345.251)	(223.611)
ສ່ວນປ່ຽນແປງໃນໜີ້ສິນອື່ນໆສຸດທິ		20.768	(7.344)
ດອກເບ້ຍທີ່ໄດ້ຮັບ		314.004	215.543
ດອກເບ້ຍທີ່ໄດ້ຈ່າຍ		(404.968)	(401.391)
ອາກອນທີ່ໄດ້ຊຳລະພາຍໃນໄລຍະ	19	880	(27.529)
ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ		**(1.161.550)**	**1.836.114**
ກິດຈະກຳການລົງທຶນ			
ຊື້ ແລະ ກໍ່ສ້າງຊັບສິນບັດຄົງທີ່		(10.194)	40.558
ຊື້ຊັບສິນຄົງທີ່ບໍ່ມີຕົວຕົນ		-	(50.481)
ຮັບເງິນຈາກການຂາຍຊັບສິນບັດຄົງທີ່		(15.899)	915
ຊື້ສິດການນຳໃຊ້		(4.831)	1.061
ເງິນປັນຜົນຮັບຈາກວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	13	4.809	-

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ໜ້າທີ **7** ຫາ 20 ແມ່ນຖືເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ ເຫຼົ່ານີ້.

ໃບລາຍງານກະແສເງິນສົດ (ກ່ອນການກວດສອບ)
ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2022

	ບົດອະທິບາຍ	ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2022 ລ້ານກີບ	ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2021 ລ້ານກີບ
ກິດຈະກຳການລົງທຶນ (ຕໍ່)			
ຮັບເງິນຈາກເງິນລົງທຶນໃນການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ	12	-	760.411
ກະແສເງິນສົດສຸດທິທີ່ໄດ້ນຳໃຊ້ໃນກິດຈະກຳການລົງທຶນ		**(26.115)**	**752.462**
ກິດຈະກຳທາງການເງິນ			
ຈ່າຍເງິນສຳລັບການຊຳລະສັນຍາເຊົ່າ		3.026	(282)
ກະແສເງິນສົດສຸດທິທີ່ນຳໃຊ້ໃນກິດຈະກຳທາງການເງິນ		**3.026**	**(282)**
ປ່ຽນແປງສຸດທິ ຂອງເງິນສົດ ແລະ ທຽບເທົ່າເງິນສົດ		**(1.184.639)**	**2.588.294**
ເງິນສົດ ແລະ ທຽບເທົ່າເງິນສົດຕົ້ນໄລຍະ		-	-
ເງິນສົດ ແລະ ທຽບເທົ່າເງິນສົດທ້າຍໄລຍະ		**(1.184.639)**	**2.588.294**

ກະກຽມໂດຍ:	ອະນຸມັດໂດຍ:	ອະນຸມັດໂດຍ:
ທ່ານ ນ. ພຸແສງທອງ ອານຸລັກຄຳ	ທ່ານ ຄຳໝອນ ວັນຊະນະ	ທ່ານ ສາຍຈິດ ສິມມະວົງ
ຫົວໜ້າພະແນກບັນຊີສັງລວມ	ຮອງຫົວໜ້າພະແນກກວດກາພາຍໃນ	ຮອງຜູ້ອຳນວຍການ

ນະຄອນຫຼວງວຽງຈັນ, ສປປ ລາວ.
ວັນທີ: 01 ພະຈິກ 2022

1. ຂໍ້ມູນກ່ຽວກັບທະນາຄານ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທະນາຄານ) ແມ່ນທະນາຄານມະຫາຊົນ ທີ່ຈົດທະບຽນໃນຕະຫຼາດຫຼັກຊັບໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (LSX).

ທະນາຄານ ໄດ້ສ້າງຕັ້ງ ແລະ ມີພູມລຳເນົາຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ມີລາຍລະອຽດກ່ຽວກັບ ທະນາຄານດັ່ງລຸ່ມນີ້:

ສຳນັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບຸລີ, ນະຄອນຫຼວງວຽງຈັນ. ໃນວັນທີ 30 ກັນຍາ 2022, ທະນາຄານມີໜຶ່ງ (1) ສຳນັກງານໃຫຍ່, ຫົກ (6) ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ, ຊາວ (20) ສາຂາຫຼັກ, ເກົ້າສິບຫົກ (96) ໜ່ວຍບໍລິການ ແລະ ສິບ (10) ຫ້ອງແລກປ່ຽນເງິນຕາທົ່ວ ສປປ ລາວ.

ກິດຈະກຳຫຼັກຂອງທະນາຄານ ເພື່ອສະໜອງການບໍລິການດ້ານທະນາຄານປະກອບມີ:

- ການລະດົມທຶນ ແລະ ຮັບເງິນຝາກຈາກ ອົງກອນ ແລະ ບຸກຄົນ
- ປ່ອຍເງິນໃຫ້ກູ້ຢືມແກ່ ອົງກອນ ແລະ ບຸກຄົນ
- ບໍລິການແລກປ່ຽນເງິນຕາຕ່າງປະເທດ
- ການບໍລິການການຄ້າລະຫວ່າງປະເທດ
- ສ່ວນຫຼຸດຂອງເອກະສານທາງດ້ານການຄ້າ
- ພັນທະບັດ ແລະ ເອກະສານທີ່ມີມູນຄ່າອື່ນໆ

ໂຄງສ້າງການຖືຮຸ້ນຂອງທະນາຄານ ໃນວັນທີ 30 ກັນຍາ 2022 ມີດັ່ງລຸ່ມນີ້:

ຜູ້ຖືຮຸ້ນ	ຈຳນວນຮຸ້ນ	%
ລັດຖະບານ	124.634.021	60
ຄູ່ຮ່ວມຮຸ້ນທາງຍຸດທະສາດ	20.772.359	10
ນັກລົງທຶນພາຍໃນ (ລວມທັງພະນັກງານຂອງທະນາຄານ) ແລະ ນັກລົງທຶນຕ່າງປະເທດ	62.316.920	30
	207.723.300	**100**

ເອກະສານລາຍງານການເງິນ ແມ່ນຖືກນຳສະເໜີ ເປັນສະກຸນເງິນກີບ ແລະ ປັດໃຫ້ເປັນເລກຖ້ວນ, ເວັ້ນເສຍແຕ່ໄດ້ລະບຸໄວ້ເປັນ ຢ່າງອື່ນ.

ເອກະສານລາຍງານການເງິນ ສະບັບນີ້ໄດ້ຮັບການຮັບຮອງຈາກ ຄະນະຜູ້ບໍລິຫານ ທຄຕລ ໃນວັນທີ: 01 ພະຈິກ 2022

2. ເຫດການສຳຄັນຕ່າງໆທີ່ເກີດຂຶ້ນໃນໄລຍະ

ອີງຕາມຄຳສັ່ງ ນາຍົກລັດຖະມົນຕີ ເລກທີ 15/ນຍ ລົງວັນທີ 21 ເມສາ 2021 ໄດ້ມີການລັອກເມືອງຂອງນະຄອນຫຼວງວຽງຈັນ ແລະ ແຂວງອື່ນໆ. ຄຳສັ່ງສະບັບໃໝ່ນີ້ໄດ້ມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 22 ເມສາ 2021 ເຖິງວັນທີ 5 ພຶດສະພາ 2021 ແລະ ໄດ້ມີການ ຂະຫຍາຍໄລຍະເວລາຂອງການລັອກເມືອງໄປຈົນເຖິງວັນທີ 14 ພະຈິກ 2021.

ທະນາຄານແຫ່ງ ສປປ ລາວໄດ້ປະກາດນະໂຍບາຍເພື່ອແກ້ໄຂຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ເຊັ່ນວ່າໄດ້ ຍົກເວັ້ນການປະຕິບັດຕາມກົດລະບຽບສະບັບເລກທີ: 512/ທຫລ ສຳ ລັບທະນາຄານທຸລະກິດ ແລະ ສະຖາບັນການເງິນ, ລົງວັນທີ 29 ມິຖຸນາ 2018. ນີ້ໝາຍຄວາມວ່າຫຼັງຈາກປັບປຸງໂຄງສ້າງຂອງໃຫ້ກູ້ແລ້ວ, ທາງທະນະຄານສາມາດຈັດປະເພດລູກຄ້າເຫຼົ່ານີ້ເປັນ ກຸ່ມຕາມແບບເດີມກ່ອນປັບປຸງໂຄງສ້າງໃໝ່. ການຍົກເວັ້ນດັ່ງກ່າວຍັງອະນຸຍາດໃຫ້ທະນາຄານທຸລະກິດປັບໂຄງສ້າງເງິນກູ້ທີ່ຖືກຈັດ ປະເພດ 'ເປັນເງິນກູ້ທີ່ບໍ່ເກີດເປັນລາຍໄດ້' ຫຼາຍກວ່າສອງຄັ້ງ ແລະ ປ່ອຍເງິນກູ້ໃຫ້ແກ່ລູກຄ້າທີ່ໄດ້ຮັບຜົນກະທົບຈາກພະຍາດ COVID-19.

ແນວທາງຂອງການຮັບມື, ທະນາຄານໄດ້ ສືບຕໍ່ປະຕິບັດນຳໃຊ້ຕາມແຈ້ງການຂອງທະນາຄານແຫ່ງ ສປປ ລາວ ເຊັ່ນ: ການປັບໂຄງ ສ້າງເງິນກູ້ ແລະ ການຕິດຕາມຢ່າງໃກ້ຊິດກັບລູກຄ້າທີ່ໄດ້ຮັບຜົນກະທົບຈາກ COVID-19 ເຊິ່ງອາດຈະມີຜົນກະທົບຕໍ່ກັບຄັງເງິນກູ້ ຂອງທະນະຄານ.

3. ພື້ນຖານການບັນຊີ

ເອກະສານລາຍງານການເງິນ ໄດ້ຖືກສ້າງຂຶ້ນເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີຂອງທະນາຄານ ຕາມທີ່ໄດ້ກຳນົດໄວ້ໃນ ເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດວັນທີ 31 ທັນວາ 2021. ເອກະສານລາຍງານການເງິນເບື້ອງຕົ້ນນີ້ (ໃບລາຍງານ ຖານະການເງິນ, ໃບລາຍງານຜົນໄດ້ຮັບ, ໃບລາຍງານຜົນໄດ້ຮັບສັງລວມ, ໃບລາຍງານກະແສເງິນສົດ ແລະ ໃບລາຍງານສ່ວນປ່ຽນແປງ ທຶນ) ແມ່ນໄດ້ນຳສະເໜີໃນຮູບແບບທີ່ສອດຄ່ອງກັບເອກະສານລາຍງານການເງິນປະຈຳໂດຍປະຕິບັດຕາມ ກົດລະບຽບການລາຍງານ ແລະ ການເປີດເຜີຍທີ່ອອກໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (LSCO).

ເອກະສານລາຍງານການເງິນ ຄວນຈະອ່ານຄວບຄູ່ກັບເອກະສານລາຍງານການເງິນປະຈຳ 06 ເດືອນຕົ້ນປີ 2022 ແລະ ປະຈຳປີ 2021.

ໃນການກະກຽມເອກະສານລາຍງານການເງິນນັ້ນ ຮຽກຮ້ອງໃຫ້ຜູ້ບໍລິຫານຕ້ອງໃຊ້ດຸນພິນິດໃນການຄາດຄະເນ ແລະ ຕັ້ງຂໍ້ສົມມຸດ ຖານທີ່ມີຜົນກະທົບຕໍ່ຊັບສິນ ແລະ ໜີ້ສິນທີ່ຖືກລາຍງານ, ການເປີດເຜີຍຊັບສິນ ແລະ ໜີ້ສິນທີ່ອາດເກີດຂຶ້ນໃນວັນທີຂອງ ເອກະສານການເງິນ ແລະ ລາຍຮັບ ແລະ ລາຍຈ່າຍໃນໄລຍະຂອງການລາຍງານ. ເຖິງແມ່ນວ່າການຄາດຄະເນເຫຼົ່ານີ້ແມ່ນອີງໃສ່ ຄວາມຮູ້ທີ່ດີທີ່ສຸດຂອງຜູ້ບໍລິຫານກ່ຽວກັບເຫດການ ແລະ ການປະຕິບັດໃນປະຈຸບັນກໍ່ຕາມ, ແຕ່ຜົນໄດ້ຮັບຕົວຈິງອາດຈະແຕກຕ່າງ ຈາກການປະມາດຄະເນເຫຼົ່ານີ້.

4. ນະໂຍບາຍການບັນຊີ

ນະໂຍບາຍບັນຊີທີ່ນຳໃຊ້ໃນການກະກຽມເອກະສານລາຍງານການເງິນແມ່ນສອດຄ່ອງກັບຂໍ້ມູນທີ່ນຳໃຊ້ເຂົ້າໃນເອກະສານລາຍງານ ການເງິນປະຈຳປີ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021.

5. ລາຍຮັບສຸດທິຈາກດອກເບ້ຍ

	ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2022 ລ້ານກີບ	ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2021 ລ້ານກີບ
ລາຍຮັບດອກເບ້ຍ:		
ການໃຫ້ກູ້ຢືມ	534.963	530.476
ເງິນຝາກຢູ່ທະນາຄານອື່ນ	77.383	13.634
ການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ	78.819	71.846
ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນອື່ນໆ	-	198
	691.165	**616.154**
ລາຍຈ່າຍດອກເບ້ຍ:		
ເງິນຝາກຂອງທະນາຄານອື່ນ	(58.597)	(48.549)
ເງິນຝາກຂອງລູກຄ້າ	(412.759)	(324.065)
	(471.356)	**(372.524)**
ລາຍຮັບສຸດທິຈາກດອກເບ້ຍ	**219.809**	**243.630**

6. ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ

	ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2022 ລ້ານກີບ	ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2021 ລ້ານກີບ
ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການຈາກ:		
ບໍລິການຊຳລະສະສາງ	109.726	62.960
ທຸລະກຳທາງດ້ານສິນເຊື່ອ	13.215	444
ທຸລະກຳທາງອື່ນໆ	17.661	13.937
	140.602	**77.341**
ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການສຳລັບ:		
ບໍລິການຊຳລະສະສາງ	(10.120)	(8.436)
ທຸລະກຳທາງອື່ນໆ	(1.556)	(861)
	(11.676)	**(9.297)**
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	**128.926**	**68.044**

7. ລາຍຈ່າຍອື່ນໆຈາກການດຳເນີນງານ

	ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2022 ລ້ານກີບ	ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2021 ລ້ານກີບ
ຄ່າເບ້ຍປະກັນໃຫ້ກອງທຶນປົກປ້ອງຜູ້ຝາກເງິນ	17.124	12.419
ຄ່າສ້ອມແປງ ແລະ ຄ່າບຳລຸງຮັກສາ	6.005	5.733
ອຸປະກອນ ແລະ ເຄື່ອງໃຊ້ຫ້ອງການ	5.327	5.068
ຂາດທຶນຈາກສະສາງຊັບສິນຄ້ຳທີ່	95	12
ຄ່າປະກັນໄພ	724	2.130
ຄ່າໂທລະຄົມມະນາຄົມ	1.910	2.467
ສາທາລະນຸປະໂພກ	2.562	2.972
ອື່ນໆ	15.359	13.082
	49.106	**43.883**

8. ກຳໄລຕໍ່ຮຸ້ນ

ການຄິດໄລ່ກຳໄລພື້ນຖານຕໍ່ຮຸ້ນໃນວັນທີ 30 ກັນຍາ 2022 ແລະ 2021 ແມ່ນອີງໃສ່ ກຳໄລທີ່ເປັນສ່ວນຂອງຜູ້ຖືຮຸ້ນສາມັນຂອງທະນາຄານໃນໄລຍະ ແລະ ຈຳນວນສະເລ່ຍຂອງຮຸ້ນສາມັນທີ່ຍັງເຫຼືອພາຍໃນໄລຍະດັ່ງຕໍ່ໄປນີ້:

	ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2022	ສຳລັບໄລຍະສາມເດືອນຂອງໄຕມາດທີ III ທີ່ສິ້ນສຸດວັນທີ 30 ກັນຍາ 2021
ກຳໄລ ສ່ວນຂອງຜູ້ຖືຮຸ້ນສາມັນຂອງບໍລິສັດ (ລ້ານກີບ)	37.437	8.716
ຈຳນວນສະເລ່ຍຂອງຮຸ້ນສາມັນສຳລັບກຳໄລພື້ນຖານຕໍ່ຮຸ້ນ (ຮຸ້ນ)	207.723.300	207.723.300
ກຳໄລຕໍ່ຮຸ້ນ (ກີບ)	180	42

9. ເງິນຝາກຢູ່ທະນາຄານອື່ນ

	ກ່ອນການກວດສອບ 30 ກັນຍາ 2022 ລ້ານກີບ	ກວດສອບ 31 ທັນວາ 2021 ລ້ານກີບ
ເງິນຝາກກະແສລາຍວັນ ແລະ ເງິນຝາກປະຢັດ	**7.579.046**	**7.707.398**
- ເປັນເງິນກີບ	9.367	181.421
- ເປັນເງິນຕາຕ່າງປະເທດ	7.569.679	7.525.977
ເງິນຝາກມີກຳນົດ	**3.880.148**	**1.468.772**
- ເປັນເງິນກີບ	2.405.000	747.890
- ເປັນເງິນຕາຕ່າງປະເທດ	1.475.148	720.882
ດອກເບ້ຍຄ້າງຮັບ	**85.653**	**6.675**
	11.544.847	**9.182.845**

9. ເງິນຝາກຢູ່ທະນາຄານອື່ນ (ຕໍ່)

ອັດຕາດອກເບ້ຍສຳລັບເງິນຝາກຢູ່ທະນາຄານອື່ນພາຍໃນໄລຍະມີດັ່ງນີ້ :

	30 ກັນຍາ 2022 % ຕໍ່ປີ	31 ທັນວາ 2021 % ຕໍ່ປີ
ເງິນຝາກກະແສລາຍວັນ	0,07 - 1,20	0,07 - 1,10
ເງິນຝາກປະຢັດ	0,07 - 2,16	0,07 - 2,16
ເງິນຝາກມີກຳນົດ	0,35 - 6,00	0,15 - 6,36

10. ເງິນກູ້ໃຫ້ແກ່ລູກຄ້າ

	ກ່ອນການກວດສອບ 30 ກັນຍາ 2022 ລ້ານກີບ	ກວດສອບ 31 ທັນວາ 2021 ລ້ານກີບ
ເງິນກູ້ໃຫ້ແກ່ລູກຄ້າທັງໝົດ	40.673.338	30.080.974
ຫັກ: ເງິນສະຂາດທຶນຈາກການເສື່ອມຄ່າ	(1.492.090)	(1.457.635)
ດອກເບ້ຍຄ້າງຮັບ	5.706.470	3.748.731
	44.887.718	**32.372.070**

ສ່ວນປ່ຽນແປງໃນເງິນສະສຳລັບການຂາດທຶນຈາກການເສື່ອມຄ່າຂອງເງິນກູ້ໃຫ້ແກ່ລູກຄ້າ ພາຍໃນເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ 2022 ມີດັ່ງລຸ່ມນີ້:

	ລ້ານກີບ
ຍອດເຫຼືອ ໃນວັນທີ 1 ມັງກອນ 2021 – ກວດສອບ	**1.457.635**
ປ່ຽນແປງສຸດທິພາຍໃນໄລຍະ	124.198
ສະສາງໜີ້ຕ້ອງຮັບທວງຍາກ	(851.968)
ຜົນຕ່າງຈາກອັດຕາແລກປ່ຽນ	762.225
ຍອດເຫຼືອ ໃນວັນທີ 30 ກັນຍາ 2022 – ກ່ອນການກວດສອບ	**1.492.090**

ລາຍລະອຽດເງິນສະສຳລັບການເສື່ອມຄ່າຂອງເງິນກູ້ໃຫ້ແກ່ລູກຄ້າ ໃນວັນທີ 30 ກັນຍາ 2022 ມີດັ່ງລຸ່ມນີ້:

	30 ກັນຍາ 2022		31 ທັນວາ 2021	
	ຍອດເຫຼືອທ້າຍ ລ້ານກີບ	ຄ່າເສື່ອມ ລ້ານກີບ	ຍອດເຫຼືອທ້າຍ ລ້ານກີບ	ຄ່າເສື່ອມ ລ້ານກີບ
ຄ່າເສື່ອມຈາກການປະເມີນເງິນກູ້ແບບດ່ຽວ	5.693.849	1.190.667	5.888.337	1.109.137
ຄ່າເສື່ອມຈາກການປະເມີນເງິນກູ້ແບບກຸ່ມ	34.979.489	301.423	24.192.637	348.498
	40.673.338	**1.492.090**	**30.080.974**	**1.457.635**

¥

10. ເງິນກູ້ໃຫ້ແກ່ລູກຄ້າ (ຕໍ່)

ອັດຕາດອກເບ້ຍສຳລັບເງິນກູ້ທຸລະກິດພາຍໃນໄລຍະ ມີດັ່ງລຸ່ມນີ້:

	30 ກັນຍາ 2022 % ຕໍ່ປີ	31 ທັນວາ 2021 % ຕໍ່ປີ
ເງິນກູ້ເປັນເງິນ ກີບ	5,00 - 16,00	5,50 - 16,00
ເງິນກູ້ເປັນເງິນ ໂດລາ	4,99 - 16,00	4,25 - 16,00
ເງິນກູ້ເປັນເງິນ ບາດ	6,00 - 11,50	6,00 - 10,00

ເງິນກູ້ແບ່ງຕາມສະກຸນເງິນ:

	ກ່ອນການກວດສອບ 30 ກັນຍາ 2022 ລ້ານກີບ	ກວດສອບ 31 ທັນວາ 2021 ລ້ານກີບ
ເງິນກູ້ເປັນເງິນ ກີບ	11.940.633	10.920.255
ເງິນກູ້ເປັນເງິນ ໂດລາ	23.829.081	15.408.832
ເງິນກູ້ເປັນເງິນ ບາດ	4.903.624	3.751.887
	40.673.338	**30.080.974**

ເງິນກູ້ແບ່ງຕາມມື້ຄົບກຳນົດເດີມ:

	ກ່ອນການກວດສອບ 30 ກັນຍາ 2022 ລ້ານກີບ	ກວດສອບ 31 ທັນວາ 2021 ລ້ານກີບ
ເງິນກູ້ໄລຍະສັ້ນ	3.999.887	2.714.300
ເງິນກູ້ໄລຍະກາງ	23.708.476	17.234.346
ເງິນກູ້ໄລຍະຍາວ	12.964.975	10.132.328
	40.673.338	**30.080.974**

11. ການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ

ທະນາຄານ ມີການລົງທຶນໃນຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແມ່ນບໍລິສັດທີ່ຈົດທະບຽນໃນຕະຫລາດຫຼັກຊັບລາວ ແລະ ໃນວັນທີ 30 ກັນຍາ 2022, ຮຸ້ນມີມູນຄ່າຍຸຕິທຳ ແມ່ນ 90.123 ລ້ານກີບ.

12. ການລົງທຶນທາງການເງິນ - ປະເພດຖືໄວ້ຈົນເຖິງວັນຄົບກຳນົດ

ການປ່ຽນແປງທີ່ມີສາລະສຳຄັນ ຂອງການລົງທຶນປະເພດຖືໄວ້ຈົນຄົບກຳນົດ ມີລາຍລະອຽດດັ່ງລຸ່ມນີ້

	ລ້ານກີບ
ຍອດເຫຼືອ ໃນວັນທີ 1 ມັງກອນ 2022 - ກວດສອບ	5.273.352
ເພີ່ມຂຶ້ນ	174.134
ວິທີຫຼຸດຕົ້ນທຶນທີ່ເກີດຂຶ້ນໃນໄລຍະ	216.432
ໄດ້ຮັບ	(348.401)
ຍອດເຫຼືອ ໃນວັນທີ 30 ກັນຍາ 2022 - ກ່ອນການກວດ ສອບ	**5.315.517**

13. ການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ

ການປ່ຽນແປງທີ່ມີສາລະສຳຄັນ ຂອງເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມມີລາຍລະອຽດດັ່ງລຸ່ມນີ້

	ລ້ານກີບ
ຍອດເຫຼືອ ໃນວັນທີ 1 ມັງກອນ 2022 – ກວດສອບ	**643.318**
ສ່ວນແບ່ງກຳໄລ(ຂາດທຶນ)ໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	28.265
ລົງທຶນເພີ່ມໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ*	6.498
ຫັກ: ເງິນປັນຜົນໄດ້ຮັບໃນໄລຍະ	(7.634)
ຍອດເຫຼືອ ໃນວັນທີ 30 ກັນຍາ 2022 - ກ່ອນການກວດສອບ	**670.447**

* ທະນາຄານມີການຈ່າຍເງິນລົງທຶນເພີ່ມໃນບໍລິສັດ ລາວເມີເຊິນນໍ ເພເມັ້ນ ເນັດເວີກ ຈຳກັດມູນຄ່າເທົ່າກັບ 2.040 ລ້ານກີບ

ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມໃນວັນທີ 30 ກັນຍາ 2022, ມີດັ່ງນີ້:

	ອັດຕາສ່ວນການ ລົງທຶນ		**ມູນຄ່າຕົ້ນທຶນ**		**ເງິນລົງທຶນວິທີສ່ວນໄດ້ເສຍ**	
	30 ກັນຍາ 2022	**31 ທັນວາ 2021**	**ກ່ອນການ ກວດສອບ 30 ກັນຍາ 2022**	**ກວດສອບ 31 ທັນວາ 2021**	**ກ່ອນການ ກວດສອບ 30 ກັນຍາ 2022**	**ກວດສອບ 31 ທັນວາ 2021**
	(%)		**ລ້ານກີບ**			
ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ	70	70	70.000	70.000	74.040	74.920
ທະນາຄານຮ່ວມທຸລະກິດລາວ - ຫວຽດ	25	25	197.839	197.839	259.502	252.650
ທະນາຄານ ລາວ-ຜຣັ່ງ ຈຳກັດ	30	30	126.000	126.000	129.272	128.048
ທະນາຄານ ລາວ-ຈີນ ຈຳກັດ	40	49	151.458	147.000	180.150	168.675
ບໍລິສັດ ປະກັນໄພລາວ-ຫວຽດ	35	35	9.168	9.168	16.709	14.282
ບໍລິສັດ ລາວເມີເຊິນນໍ ເພເມັ້ນ ເນັດເວີກ ຈຳກັດ	20	20	6.800	4.760	10.774	4.743
ລວມ			**561.265**	**554.767**	**670.447**	**643.318**

14. ຊັບສິນບັດຄົງທີ່ ແລະ ອຸປະກອນ

ການເຄື່ອນໄຫວ ຂອງຊັບສິນບັດຄົງທີ່ ແລະ ອຸປະກອນ ສຳລັບໄລຍະ ມີດັ່ງຕໍ່ໄປນີ້:

	ລ້ານກີບ
ຍອດເຫຼືອ ໃນວັນທີ 1 ມັງກອນ 2022 - ກວດສອບ	**563.503**
ເພີ່ມຂຶ້ນ*	97.427
ໂອນໄປ ຊັບສິນບັດອື່ນໆ	(28.706)
ສະສາງ / ຂາຍ, ສຸດທິ	(3.308)
ຄ່າຫຼ້ຍຫ້ຽນ	(71.096)
ຍອດເຫຼືອ ໃນວັນທີ 30 ກັນຍາ 2022 - ກ່ອນການກວດສອບ	**557.820**

* ໃນໄລຍະນີ້, ການເພີ່ມຂຶ້ນສ່ວນຫຼາຍຂອງຊັບສິນບັດຄົງທີ່ ແລະ ອຸປະກອນ ແມ່ນຄື ເຊີເວີ, ອຸປະກອນສຳລັບໄອທີ ແລະ ເຄື່ອງຈັກນັບເງິນ ເປັນຕົ້ນ.

15. ຊັບສິນບັດຄົງທີ່ບໍ່ມີຕົວຕົນ

ການເຄື່ອນໄຫວ ຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນ ສຳລັບໄລຍະ ມີດັ່ງຕໍ່ໄປນີ້:

	ລ້ານກີບ
ຍອດເຫຼືອ ໃນວັນທີ 1 ມັງກອນ 2022 - ກວດສອບ	**293.321**
ເພີ່ມຂຶ້ນ	240
ຄ່າຫຼ້ຍຫ້ຽນ	(8.929)
ຍອດເຫຼືອ ໃນວັນທີ 30 ກັນຍາ 2022 - ກ່ອນການກວດສອບ	**284.632**

16. ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນໆ

	ກ່ອນການກວດສອບ 30 ກັນຍາ 2022 ລ້ານກີບ	ກວດສອບ 31 ທັນວາ 2021 ລ້ານກີບ
ເງິນຝາກກະແສລາຍວັນ	**5.826.117**	**4.239.624**
– ເປັນເງິນກີບ	2.683.427	1.691.702
– ເປັນເງິນຕາຕ່າງປະເທດ	3.142.690	2.547.922
ເງິນຝາກປະຢັດ	**266.977**	**222.603**
– ເປັນເງິນກີບ	97.259	113.520
– ເປັນເງິນຕາຕ່າງປະເທດ	169.718	109.083
ເງິນຝາກມີກຳນົດ	**833.790**	**764.652**
– ເປັນເງິນກີບ	250.870	261.870
– ເປັນເງິນຕາຕ່າງປະເທດ	582.920	502.782
ອື່ນໆ	**25.747**	**20.652**
– ເປັນເງິນກີບ	15.292	19.912
– ເປັນເງິນຕາຕ່າງປະເທດ	10.455	740
ດອກເບ້ຍຄ້າງຈ່າຍ	**20.932**	**21.905**
	6.973.562	**5.269.436**

16. ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນໆ (ຕໍ່)

ອັດຕາດອກເບ້ຍສຳລັບເງິນຝາກໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນໃນໄລຍະມີດັ່ງລຸ່ມນີ້:

	30 ກັນຍາ 2022 % ຕໍ່ປີ	31 ທັນວາ 2021 % ຕໍ່ປີ
ເງິນຝາກກະແສລາຍວັນ	0,00 – 0,30	0,00 – 0,30
ເງິນຝາກປະຢັດ	ບໍ່ມີດອກເບ້ຍ	ບໍ່ມີດອກເບ້ຍ
ເງິນຝາກມີກຳນົດ	0,56 – 6,65	0,56 – 6,65

17. ໜີ້ຕ້ອງສົ່ງໃຫ້ລູກຄ້າ

	ກ່ອນການກວດສອບ 30 ກັນຍາ 2022 ລ້ານກີບ	ກວດສອບ 31 ທັນວາ 2021 ລ້ານກີບ
ເງິນຝາກກະແສລາຍວັນ	**9.556.969**	**7.627.802**
ເງິນຝາກກະແສລາຍວັນເປັນເງິນກີບ	3.357.469	3.453.603
ເງິນຝາກກະແສລາຍວັນເປັນເງິນຕາຕ່າງປະເທດ	6.199.500	4.174.199
ເງິນຝາກປະຢັດ	**38.003.594**	**28.428.750**
ເງິນຝາກປະຢັດເປັນເງິນກີບ	15.694.960	13.710.668
ເງິນຝາກປະຢັດເປັນເງິນຕາຕ່າງປະເທດ	22.308.634	14.718.082
ເງິນຝາກມີກຳນົດ	**24.885.648**	**20.439.404**
ເງິນຝາກມີກຳນົດເປັນເງິນກີບ	8.770.317	9.446.282
ເງິນຝາກມີກຳນົດເປັນເງິນຕາຕ່າງປະເທດ	16.115.331	10.993.122
ເງິນຝາກມັດຈຳ	**106.352**	**79.905**
ເງິນຝາກມັດຈຳເປັນເງິນກີບ	40.868	24.830
ເງິນຝາກມັດຈຳເປັນເງິນຕາຕ່າງປະເທດ	65.484	55.075
ໜີ້ຕ້ອງສົ່ງລູກຄ້າອື່ນໆ	**273.812**	**95.915**
ດອກເບ້ຍຄ້າງຈ່າຍ	**614.235**	**497.393**
	73.440.610	**57.169.169**

ເງິນຝາກປະຢັດຂອງລູກຄ້າ ລວມມີເປັນສະກຸນເງິນກີບ, ໂດລາ ແລະ ບາດ ເຊິ່ງມີອັດຕາດອກເບ້ຍ ຕັ້ງແຕ່ 1,25% – 1,89%, 0,90% – 1,15% ແລະ 0,45% – 0,70% ຕໍ່ປີ ຕາມລຳດັບ.

ເງິນຝາກມີກຳນົດ ເປັນສະກຸນເງິນກີບ, ໂດລາ, ບາດ ມີກຳນົດຕັ້ງແຕ່ 3, 6, 12 ເດືອນ ແລະ ຫຼາຍກວ່າ 1 ປີ ເຊິ່ງມີອັດຕາດອກເບ້ຍ ຕັ້ງແຕ່ 3,16% – 12,15%, 1,65% – 7,75% ແລະ 1,1% – 7,75% ຕໍ່ປີ ຕາມລຳດັບ.

18. ເງິນກູ້ຢືມຈາກທະນາຄານອື່ນ

ການເຄື່ອນໄຫວຂອງເງິນກູ້ຢືມໄລຍະຍາວ ໃນວັນທີ 30 ກັນຍາ 2022 ມີດັ່ງລຸ່ມນີ້:

	ລ້ານກີບ
ຍອດເຫຼືອ ໃນວັນທີ 1 ມັງກອນ 2022 - ກວດສອບ	**3.161.581**
ເພີ່ມຂຶ້ນ	91.667
ຈ່າຍຄືນ	(1.405.268)
ຂາດທຶນຈາກອັດຕາແລກປ່ຽນ	1.493.640
ຍອດເຫຼືອ ໃນວັນທີ 30 ກັນຍາ 2022 - ກ່ອນການກວດສອບ	**3.341.620**

	ກ່ອນການກວດສອບ 30 ກັນຍາ 2022 ລ້ານກີບ	ກວດສອບ 31 ທັນວາ 2021 ລ້ານກີບ
ເງິນກູ້ຢືມຈາກທະນາຄານແຫ່ງ ສປປ ລາວ	3.339.787	2.251.071
ເງິນກູ້ຢືມຈາກທະນາຄານອື່ນ	1.833	910.510
ລວມ	**3.341.620**	**3.161.581**
ດອກເບ້ຍຄ້າງຈ່າຍ	405.668	193.042
	3.747.288	**3.354.623**

19. ທຶນຈົດທະບຽນ

ທຶນຈົດທະບຽນບໍ່ໄດ້ມີການປ່ຽນແປງເກີດຂຶ້ນໃນໄລຍະນີ້.

20. ຖັງສະສົມຕາມລະບຽບການ

	ຖັງສະສົມຕາມລະບຽບການ ລ້ານກີບ	ຖັງຂະຫຍາຍທຸລະກິດ ແລະ ຖັງສະສົມອື່ນໆ ລ້ານກີບ	ລວມ ລ້ານກີບ
ຍອດເຫຼືອ ໃນວັນທີ 1 ມັງກອນ 2022 – ກວດສອບ	**228.135**	**603.532**	**831.667**
ແບ່ງສ່ວນເຂົ້າຖັງສະສົມສຳລັບປີ 2022	496	4.472	4.968
ຍອດເຫຼືອ ໃນວັນທີ 30 ກັນຍາ 2022 - ກ່ອນການກວດສອບ	**228.631**	**608.004**	**836.635**

21. ລາຍລະອຽດເພີ່ມຕື່ມກ່ຽວກັບກະແສເງິນສົດ

ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ທີ່ລວມຢູ່ໃນໃບລາຍງານກະແສເງິນສົດມ ປະກອບມີມູນຄ່າຂອງເອກະສານລາຍງານຖານະການເງິນ ດັ່ງລາຍລະອຽດລຸ່ມນີ້:

	ກ່ອນການກວດສອບ 30 ກັນຍາ 2022 ລ້ານກີບ	ກ່ອນການກວດສອບ 30 ກັນຍາ 2021 ລ້ານກີບ
ເງິນສົດ ແລະ ທຽບເທົ່າເງິນສົດໃນຄັງ	3.537.105	2.590.860
ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງ ສປປ ລາວ	16.237.873	12.314.823
ເງິນຝາກກະແສລາຍວັນຢູ່ທະນາຄານອື່ນ	7.579.047	6.658.167
ເງິນຝາກມີກຳຫນົດ ທີ່ມີກຳຫນົດ 90 ວັນ	819.246	785.623
	28.173.271	**22.349.472**

22. ໜີ້ສິນທີ່ອາດເກີດຂຶ້ນ ແລະ ຂໍ້ຜູກພັນ

	30 ກັນຍາ 2022 ລ້ານກີບ	31 ທັນວາ 2021 ລ້ານກີບ
ວົງເງິນສິນເຊື່ອໃຫ້ແກ່ລູກຄ້າ (ii)	2.752.335	1.917.706
ໜັງສືຄ້ຳປະກັນທາງການເງິນ (i)	531.310	502.217
ໜັງສືສິນເຊື່ອກັບທີ່	517.827	375.568
ງສືສິນເຊື່ອລໍຖ້າຊຳລະສະສາງ	183.820	-
	3.985.292	**2.795.491**

(i) ໜັງສືຄ້ຳປະກັນທາງການເງິນ

ໜັງສືສິນເຊື່ອ, ໜັງສືຄ້ຳປະກັນ (ລວມທັງໜັງສືສິນເຊື່ອເພື່ອຄ້ຳປະກັນ) ແລະ ໜັງສືໃດໜຶ່ງທີ່ເຮັດໃຫ້ທະນາຄານຕ້ອງເປັນຜູ້ຈ່າຍເງິນແທນລູກຄ້າໃນກໍລະນີທີ່ລູກຄ້າຜິດສັນຍາ, ໜັງສືຄ້ຳປະກັນ ແລະ ໜັງສືສິນເຊື່ອເພື່ອຄ້ຳປະກັນ ຖືວ່າມີຄວາມສ່ຽງຄ້າຍຄືກັບເງິນກູ້, ໜັງສືຄ້ຳປະກັນສາມາດເຮັດເປັນຮູບແບບໃນບິນແລກປ່ຽນ ຫຼື ໃນຮູບແບບໜັງສືສິນເຊື່ອບໍ່ສາມາດຖອນຄືນໄດ້, ໜັງສືຄ້ຳປະກັນເງິນລ່ວງໜ້າ ແລະ ໜັງສືຮັບຮອງໜີ້ຈາກບິນສ່ວນຫຼຸດ.

(ii) ວົງເງິນສິນເຊື່ອໃຫ້ແກ່ລູກຄ້າແລະທະນາຄານອື່ນ

ບັນດາຂໍ້ຜູກພັນສຳລັບຕໍ່ອາຍຸສັນຍາສິນເຊື່ອແມ່ນມີໄວ້ສຳລັບເງິນກູ້ ແລະ ເງິນກູ້ໝຸນວຽນ. ຂໍ້ຜູກພັນໂດຍທົ່ວໄປມີມື້ຄົບກຳນົດທີ່ໄດ້ກຳນົດໄວ້, ຫຼື ສາເຫດຂອງການຢຸດຕິສັນຍາອື່ນໆ. ດັ່ງນັ້ນ, ຂໍ້ຜູກພັນອາດຈະໝົດກຳນົດໂດຍທີ່ຍັງບໍ່ຖືກຖອນ, ມູນຄ່າໃນສັນຍາທັງໝົດບໍ່ຈຳເປັນຕ້ອງສະແດງເຖິງຄວາມຕ້ອງການເງິນສົດໃນອະນາຄົດ.

ເຖິງຢ່າງໃດກໍຕາມ, ໂອກາດຄ່າເສື່ອມໜີ້ເສຍຈະເກີດຂຶ້ນ ແມ່ນຕ່ຳກວ່າມູນຄ່າທັງໝົດ ຂອງບັນດາຂໍ້ຜູກພັນທີ່ຍັງບໍ່ໄດ້ຖືກນຳໃຊ້ ເນື່ອງຈາກວ່າ, ຂໍ້ຜູກພັນໃນການຕໍ່ອາຍຸສິນເຊື່ອ ຂຶ້ນຢູ່ກັບລູກຄ້າສາມາດຮັກສາມາດຕະຖານສະເພາະ ທີ່ໄດ້ກຳນົດໄວ້. ທະນາຄານຕິດຕາມມື້ຄົບກຳນົດຂອງຂໍ້ຜູກພັນສິນເຊື່ອ, ເພາະວ່າຂໍ້ຜູກພັນທີ່ມີອາຍຸສັນຍາໄລຍະຍາວກວ່າ ແມ່ນມີຄວາມສ່ຽງຫຼາຍກວ່າຂໍ້ຜູກພັນທີ່ມີອາຍຸສັນຍາສັ້ນ.

23. ການບໍລິຫານທຶນ

ທະນາຄານໄດ້ຮັກສາທຶນສຳຮອງຂັ້ນຕ່ຳຕາມລະບຽບການ ເພື່ອໃຫ້ສອດຄ່ອງຕາມຂໍ້ກຳນົດເລກທີ 536/ກຄທສ/ທຫລ, ລົງວັນທີ 14 ຕຸລາ 2009 ອອກໂດຍຮັກສາການຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ, ທະນາຄານແຫ່ງ ສປປ ລາວ ແລະ ຄຳແນະນຳອື່ນໆ. ຈຸດປະສົງເບື້ອງຕົ້ນຂອງການບໍລິຫານທຶນຂອງທະນາຄານແມ່ນເພື່ອຮັບປະກັນວ່າ ທະນາຄານໄດ້ປະຕິບັດຕາມຂໍ້ກຳນົດທາງການເງິນຂອງທະນາຄານແຫ່ງ ສປປ ລາວ, ທະນາຄານຮັບຮູ້ເຖິງຄວາມຈຳເປັນຂອງ ທະນາຄານເພື່ອຮັກສາການບໍລິຫານຊັບສິນ ແລະ ໜີ້ສິນໃຫ້ມີປະສິດທິພາບເພື່ອສ້າງສົມດຸນລະຫວ່າງການສ້າງກຳໄລ ແລະ ຄວາມ ພຽງພໍຂອງທຶນ

ອີງຕາມຂໍ້ກຳນົດເລກທີ 536/ກຄທສ/ທຫລ, ທຶນຕາມລະບຽບການຂອງທະນາຄານການຖືກວິເຄາະເປັນ 2 ລະດັບຄື:

- ທຶນຊັ້ນ 1 ປະກອບດ້ວຍ: ທຶນຈົດທະບຽນ, ຄັງສະສົມຕາມລະບຽບການ, ທຶນເພື່ອການຂະຫຍາຍທຸລະກິດ ແລະ ທຶນອື່ນໆ ແລະ ກຳໄລລໍຖ້າແບ່ງປັນ;

- ທຶນຊັ້ນ 2 ແມ່ນມູນຄ່າທີ່ຕ່ຳກວ່າ 1,25% ຂອງຍອດລວມຄວາມສ່ຽງຂອງລາຍການໃນໃບລາຍງານຖານະການເງິນ ຫຼືຍອດ ເຫຼືອຂອງເງິນແຮທົ່ວໄປ ແລະເງິນແຮສຳລັບຄວາມສ່ຽງ ແລະ ລາຍຈ່າຍເງິນແຮພາຍໃນໄລຍະສາມເດືອນ.

ຂອບເຂດຕ່າງໆ ແມ່ນຖືກນຳໃຊ້ເພື່ອເປັນອີງປະກອບຂອງທຶນອີງໃສ່ ທຶນຊັ້ນ 2 ບໍ່ສາມາດເກີນທຶນຊັ້ນ 1 ໄດ້ ແລະ ໜີ້ສິນສຳຮອງ ບໍ່ສາມາດເກີນ 50% ຂອງທຶນຊັ້ນ 1.

ການວິເຄາະທຶນແມ່ນອີງຕາມຂໍ້ມູນທາງການເງິນທີ່ໄດ້ຈາກເອກະສານລາຍງານການເງິນ ດັ່ງຕໍ່ໄປນີ້:

	30 ກັນຍາ 2022 ລ້ານກີບ	31 ທັນວາ 2021 ລ້ານກີບ
ທຶນຊັ້ນ 1	2.139.294	2.132.146
ທຶນຊັ້ນ 2	-	-
ລວມທຶນ	**2.139.294**	**2.132.146**
ຫັກອອກຈາກທຶນ (ການລົງທຶນໃນນິຕິບຸກຄົນອື່ນ)	(670.447)	(643.318)
ທຶນສຳລັບການຄິດໄລ່ CAR (A)	**1.468.847**	**1.488.828**
ຄວາມສ່ຽງສຳຄັນຢູ່ໃບລາຍງານຖານະການເງິນ	23.688.363	18.738.102
ຄວາມສ່ຽງສຳຄັນຢູ່ລາຍການນອກໃບລາຍງານຖານະການເງິນ	2.105.480	1.467.354
ລວມຄວາມສ່ຽງສຳຄັນຢູ່ຊັບສິນ (B)	**25.793.843**	**20.205.456**
ອັດຕາສ່ວນຄວາມພຽງພໍຂອງທຶນ (A/B)	**5,69%**	**7,37%**

24. ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ກ) ຜູ້ຖືຮຸ້ນໃຫຍ່ຂອງທະນາຄານ ແມ່ນ ລັດຖະບານລາວ ຖືຮຸ້ນ 60% ຂອງຮຸ້ນທັງໝົດຂອງທະນາຄານ. ຮຸ້ນສ່ວນທີ່ເຫຼືອຂອງ ທະນາຄານ ແມ່ນຖືໂດຍນັກລົງທຶນທົ່ວໄປ.

ຂໍ້ມູນຂອງທະນາຄານ ໃນສ່ວນຂອງເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມແມ່ນ ໄດ້ເປີດເຜີຍ ຢູ່ບົດອະທິບາຍຂໍ້ທີ 13.

ຂ) ລາຍການເຄື່ອນໄຫວທີ່ເປັນສາລະສຳຄັນກັບພາກສ່ວນທີ່ກ່ຽວຂ້ອງ ໃນວັນທີ 30 ກັນຍາ 2022 ມີດັ່ງລຸ່ມນີ້:

	30 ກັນຍາ 2022 ລ້ານກີບ	30 ກັນຍາ 2021 ລ້ານກີບ
ລາຍຮັບດອກເບ້ຍ ແລະ ອື່ນໆ		
ບໍລິສັດແມ່	243.266	204.728
ລາຍຈ່າຍດອກເບ້ຍ ແລະ ອື່ນໆ		
ພາກສ່ວນທີ່ກ່ຽວຂ້ອງ	109.048	77.718

ລາຍການເຄື່ອນໄຫວ ກັບສະພາບໍລິຫານຂອງທະນາຄານ

ຄ) ຜົນປະໂຫຍດໃຫ້ແກ່ສະພາບໍລິຫານ ແລະ ຄະນະອຳນວຍການ ແມ່ນມີລາຍລະອຽດດັ່ງລຸ່ມນີ້:

	30 ກັນຍາ 2022 ລ້ານກີບ	30 ກັນຍາ 2021 ລ້ານກີບ
ເງິນເດືອນ	1.158	1.038
ເງິນບຳເນັດ	-	295
ເງິນອຸດໜູນຕ່າງໆ	814	733
	1.972	**2.066**

ງ) ຍອດຄົງເຫຼືອທີ່ເກີດຈາກ ລາຍຮັບດອກເບ້ຍ. ລາຍຈ່າຍດອກເບ້ຍ ແລະ ອື່ນໆ

ຍອດຄົງເຫຼືອ ໃນໄລຍະລາຍງານ ຂອງລາຍການຂອງພາກສ່ວນທີ່ກ່ຽວຂ້ອງ ມີດັ່ງຕໍ່ໄປນີ້:

	30 ກັນຍາ 2022 ລ້ານກີບ	31 ທັນວາ 2021 ລ້ານກີບ
ໜີ້ຕ້ອງຮັບ		
ບໍລິສັດແມ່	5.397.163	5.356.812
ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	1.535.527	837.737
ພາກສ່ວນທີ່ກ່ຽວຂ້ອງ	17.456.536	16.121.071
ໜີ້ຕ້ອງສົ່ງ		
ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	1.826.171	1.208.259
ພາກສ່ວນທີ່ກ່ຽວຂ້ອງ	3.745.430	2.435.033